# LOMA LINDA UNIVERSITY CHILDREN'S HOSPITAL

ນະໂຍບາຍການປະຕິບັດວຽກງານ

| | | | |
|---|---|---|---|
| **ປະເພດ:** | ການເງິນ | **ລະຫັດ:** | CH-C-22 |
| | | **ວັນທີມີຜົນບັງຄັບໃຊ້:** | 12/2017 |
| **ຫົວຂໍ້:** | ການຊ່ວຍເຫຼືອທາງການເງິນ | **ການປ່ຽນແທນ:** | 12/2016 |
| | | **ໜ້າ:** | 1 ຈາກ 18 |

---

ຈຸດປະສົງ:

ຈຸດປະສົງຂອງນະໂຍບາຍນີ້ແມ່ນເພື່ອອະທິບາຍເກນມາດຕະຖານຊຶ່ງຈະຖືກນຳໃຊ້ໂດຍ Loma Linda University Children's Hospital (LLUCH) ເພື່ອໃຫ້ເປັນໄປຕາມ ຂໍ້ກຳນົດທີ່ບົ່ງໄວ້ໃນກົດໝາຍຂອງຣັຖ ແລະຣັຖບານກາງ, ລວມເຖິງ ມາດຕາ 501(r) ຂອງປະມວນກົດໝາຍພາສີອາກອນ (Internal Revenue Code, IRC) ຂອງປີ 1986, ສະບັບແກ້ໄຂ, ແລະກົດຂໍ້ບັງຄັບໃນນັ້ນ ແລະກົດໝາຍວ່າດ້ວຍນະໂຍບາຍການກຳນົດລາຄາທີ່ເປັນທັມຂອງໂຮງໝໍໃນຄາລິຟໍເນັຽ (California Hospital Fair Pricing Policies Act).

ບັນດາໂຮງໝໍທີ່ບໍລິການເບິ່ງແຍງສຸກເສີນໃນຣັຖຄາລິຟໍເນັຽຕ້ອງປະຕິບັດຕາມນະໂຍບາຍ ແລະແນວທາງປະຕິບັດຊຶ່ງສອດຄ່ອງກັບກົດໝາຍຂອງຣັຖຄາລິຟໍເນັຽ ແລະ IRC ມາດຕາ 501(r), ລວມເຖິງ ຂໍ້ກຳນົດຕ່າງໆ ສຳລັບນະໂຍບາຍທີ່ເປັນລາຍລັກອັກສອນ ຊຶ່ງລະບຸເຖິງ ການຫຼຸດລາຄາ ແລະການເບິ່ງແຍງເພື່ອການກຸສົນໃຫ້ແກ່ບັນດາຄົນເຈັບທີ່ມີຄຸນສົມບັດເໝາະສົມດ້ານການເງິນ. ນະໂຍບາຍນີ້ມີເຈດຕະນາເພື່ອສະໜອງຕອບຕໍ່ຂໍ້ບັງຄັບທາງກົດໝາຍຕ່າງໆ ແລະໃຫ້ການເບິ່ງແຍງເພື່ອການກຸສົນ ແລະຫຼຸດລາຄາໃຫ້ແກ່ບັນດາຄົນເຈັບທີ່ມີເງື່ອນໄຂເໝາະສົມດ້ານການເງິນ ພາຍໃຕ້ເງື່ອນໄຂ ແລະຂໍ້ກຳນົດຂອງນະໂຍບາຍຊ່ວຍເຫຼືອດ້ານການເງິນ (Financial Assistance Policy, FAP) ຂອງ LLUCH

## ຂອບເຂດຂອງນະໂຍບາຍ:

ນະໂຍບາຍນີ້ກ່ຽວຂ້ອງກັບການຊ່ວຍເຫຼືອດ້ານການເງິນຊຶ່ງຈັດຫາໃຫ້ແກ່ບັນດາຄົນເຈັບໂດຍ LLUCH ສຳລັບການບໍລິການຕ່າງໆ ທີ່ຈຳເປັນໃນທາງການແພດ. ຄຳຮ້ອງຂໍທັງໝົດສຳລັບການຊ່ວຍເຫຼືອດ້ານການເງິນຈາກຄົນເຈັບ, ຄອບຄົວຂອງຄົນເຈັບ, ແພດໝໍ ຫຼື ເຈົ້າໜ້າທີ່ໂຮງໝໍ ຄວນຖືກຈັດການແກ້ໄຂໂດຍສອດຄ່ອງກັບນະໂຍບາຍນີ້. ນະໂຍບາຍນີ້ນຳໃຊ້ບໍ່ໄດ້ກັບການບໍລິການຂອງແພດທີ່ເຮັດໃຫ້ທີ່ LLUCH. ແພດສຸກເສີນບໍ່ແມ່ນລູກຈ້າງຂອງ LLUCH ແລະໄດ້ນຳເອົານະໂຍບາຍອີກສະບັບໜຶ່ງແຍກຕ່າງຫາກມາໃຊ້ ຊຶ່ງໃຫ້ສ່ວນຫຼຸດລາຄາແກ່ຄົນເຈັບທີ່ບໍ່ມີປະກັນພັຍ ຫຼື ຄົນເຈັບທີ່ມີຄ່າໃຊ້ຈ່າຍທາງການແພດສູງ. (ລາຍຊື່ຂອງຜູ້ໃຫ້ບໍລິການທີ່ບໍ່ຢູ່ພາຍໃຕ້ໂຄງການ LLUCH FAP ສາມາດເບິ່ງໄດ້ທີ່ເວັບໄຊ https://medical-center.lomalindahealth.org/financial-assistance#lluch

## ຫຼັກປັດຊະຍາ:

ໃນຖານະເປັນອົງການທີ່ຕັ້ງຢູ່ເທິງພື້ນຖານຄວາມສັດທາ, LLUCH ພະຍາຍາມທີ່ຈະສະໜອງຕອບຕໍ່ຄວາມຕ້ອງການດ້ານການເບິ່ງແຍງສຸຂະພາບຂອງຄົນເຈັບໃນເຂດພື້ນທີ່ໃຫ້ບໍລິການຂອງຕົນ. ພາລະໜ້າທີ່ຂອງ LLUCH ແມ່ນ "ເພື່ອສືບຕໍ່ການ

ບໍາບັດຮັກສາຂອງອົງພະເຢຊູ ແລະເພື່ອເຮັດໃຫ້ມະນຸດສົມບູນ." ພາລະໜ້າທີ່ຂອງ LLUCH ແມ່ນໄດ້ສະແດງອອກໃຫ້ເຫັນຢ່າງຈະແຈ້ງຜ່ານໂຄງການ FAP. ຄວາມຮັບຜິດຊອບທໍາອິດແລະສູງສຸດຂອງ LLUCH ແມ່ນການເບິ່ງວ່າ ຄົນເຈັບທັງຫຼາຍໄດ້ຮັບການເບິ່ງແຍງຮັກສາທາງການແພດດ້ວຍຄວາມເມດຕາ, ຢ່າງກົງຕໍ່ເວລາ, ແລະເໝາະສົມ ໂດຍຄໍານຶງເຖິງຄວາມເປັນສ່ວນຕົວ, ກຽດສັກສີ, ແລະຄວາມຍິນຍອມຂອງຄົນເຈັບ

LLUCH ໃຫ້ບໍລິການດ້ານໂຮງໝໍຢ່າງສະໝໍ່າສະເໝີແກ່ຄົນເຈັບທີ່ອາໄສຢູ່ໃນເຂດທ້ອງຖິ່ນ ແລະອ້ອມຮອບເຂດ Loma Linda. ໃນຖານະເປັນມະຫາວິທະຍາໄລດ້ານການສອນທີ່ສໍາຄັນ ແລະເປັນໂຮງໝໍຂັ້ນສາມ, ນອກຈາກນີ້ LLUCH ຍັງຮັບໃຊ້ໃນຖານະເປັນແຫຼ່ງຊ່ວຍເຫຼືອລະດັບພູມີພາກ, ໃຫ້ການເບິ່ງແຍງຮັກສາສໍາລັບຄົນເຈັບທີ່ມີຄວາມຕ້ອງການຊັບຊ້ອນ ແລະຍອມຮັບການສົ່ງຕົວຄົນເຈັບຈາກໂຮງໝໍຫຼາຍແຫ່ງອື່ນໆ ຢູ່ສະເໝີ. LLUCH ຍັງສະເໜີໂຄງການການປິ່ນປົວທີ່ຕ້ອງໃຊ້ຄວາມຊໍານານສູງພິເສດຫຼາຍໂຄງການ, ຊຶ່ງບາງໂຄງການມີລັກສະນະສະເພາະພິເສດ. ເພື່ອຊ່ວຍສະໜອງຕອບຕໍ່ຄວາມຕ້ອງການຂອງຄົນເຈັບ, LLUCH ມຸ່ງໝັ້ນໃນການຈັດຫາການເຂົ້າເຖິງໂຄງການຊ່ວຍເຫຼືອດ້ານການເງິນເມື່ອຄົນເຈັບບໍ່ມີປະກັນໄພ ຫຼື ມີປະກັນພັຍໜ້ອຍ ແລະອາດຕ້ອງການຄວາມຊ່ວຍເຫຼືອໃນການຊ່ວຍຈ່າຍຄ່າປິ່ນປົວຈາກໂຮງໝໍຂອງເຂົາເຈົ້າ. ໂຄງການເຫຼົ່ານີ້ ລວມເຖິງໂຄງການຕ່າງໆ ທີ່ຣັຖບານໃຫ້ທຶນສະໜັບສະໜູນ, ການເບິ່ງແຍງເພື່ອການກຸສົນ ແລະການເບິ່ງແຍງເພື່ອການກຸສົນປະເພດຊໍາລະເງິນແບບຫຼຸດລາຄາ ຕາມທີ່ອະທິບາຍໄວ້ໃນບ່ອນນີ້.

ໂດຍສອດຄ່ອງກັບກົດຂໍ້ບັງຄັບຂອງກົດໝາຍວ່າດ້ວຍການປິ່ນປົວທາງການແພດ ແລະການອອກລູກແບບສຸກເສີນຂອງຣັຖບານກາງ (Federal Emergency Medical Treatment and Labor Act, EMTALA), LLUCH ແມ່ນຖືກຫ້າມຈາກການເຂົ້າພົວພັນໃນການກະທໍາໃດໆ ທີ່ເປັນຫ້າມປາມບຸກຄົນຈາກການຊອກຫາການປິ່ນປົວສຸກເສີນ, ເຊັ່ນ ການ ຮຽກ ຮ້ອງວ່າໃນພະແນກສຸກເສີນຄົນເຈັບຕ້ອງຈ່າຍເງິນກ່ອນທີ່ຈະໄດ້ຮັບການປິ່ນປົວຄວາມເຈັບປ່ວຍໃນທາງການແພດແບບສຸກເສີນ ຫຼື ໂດຍການອະນຸຍາດໃຫ້ມີການເກັບໜີ້ ຊຶ່ງເປັນການແຊກແຊງຂໍ້ກໍານົດຂອງການເບິ່ງແຍງຮັກສາທາງການແພດແບບສຸກເສີນ, ໂດຍປາດສະຈາກການຈໍາແນກບຸກຄົນ.

## ຄວາມໝາຍຂອງຄໍາສັບ:

<u>ຈໍານວນເງິນທີ່ຮຽກເກັບໂດຍທົ່ວໄປ (Amount Generally Billed, AGB)</u>:

ກົມພາສີກອນກໍານົດໃຫ້ LLUCH ຕ້ອງຈັດຕັ້ງວິທີການທີ່ຄົນເຈັບທີ່ມີສິດເໝາະສົມສໍາລັບການຊ່ວຍເຫຼືອທາງການເງິນຈະບໍ່ຖືກເກັບເງິນໃນຈໍານວນຫຼາຍກວ່າອັດຕາ AGB ສໍາລັບ ກໍລະນີສຸກເສີນ ແລະການບໍລິການທີ່ຈໍາເປັນໃນທາງການແພດອື່ນໆ. ເພື່ອຈຸດປະສົງຂອງຂໍ້ກໍານົດນີ້, LLUCH ໄດ້ນໍາເອົາວິທີການສະເພາະມາໃຊ້ຊຶ່ງອີງໃສ່ອັດຕາຂອງ Medicare.

<u>ການເບິ່ງແຍງເພື່ອການກຸສົນ</u>:

ການເບິ່ງແຍງເພື່ອການກຸສົນແມ່ນໝາຍເຖິງການບໍລິການໂຮງໝໍສໍາລັບຄົນເຈັບນອກໂຮງໝໍ ຫຼື ຄົນເຈັບນອນປິ່ນປົວໃນໂຮງໝໍຄົນໃດໆ ທີ່ມີຄວາມຈໍາເປັນໃນທາງການແພດ ຊຶ່ງຈັດຫາໃຫ້ແກ່ຄົນເຈັບທີ່ມີລາຍໄດ້ຕໍ່າກວ່າ 200% ຂອງລະດັບຄວາມທຸກຍາກທີ່ຣັຖບານກໍານົດໄວ້ໃນປັດຈຸບັນ ແລະຜູ້ທີ່ມີຄຸນສົມບັດສອດຄ່ອງກັບຂໍ້ກໍານົດທີ່ບົ່ງໄວ້ໃນໂຄງການ LLUCH FAP.

<u>ການຊໍາລະເງິນແບບຫຼຸດລາຄາສໍາລັບການເບິ່ງແຍງເພື່ອການກຸສົນບາງສ່ວນ:</u>

ການຊຳລະເງິນແບບຫຼຸດລາຄາຜ່ານໂຄງການ FAP ແມ່ນໝາຍເຖິງ ການເບິ່ງແຍງຮັກສາເພື່ອການກຸສົນບາງສ່ວນຊຶ່ງເປັນຜົນມາຈາກການບໍລິການຂອງໂຮງໝໍສຳລັບຄົນເຈັບໃນໂຮງໝໍ ຫຼື ນອກໂຮງໝໍທີ່ມີຄວາມຈຳເປັນທາງການແພດ ຊຶ່ງຈັດຫາໃຫ້ແກ່ບຸກຄົນຜູ້ທີ່ບໍ່ມີປະກັນໄພ ຫຼື ຜູ້ທີ່ປະກັນໄພຄຸ້ມຄອງຂອງເຂົາບໍ່ມີສ່ວນຫຼຸດລາຄາໃຫ້ຈາກອັດຕາປົກກະຕິ ແລະອັດຕາຕາມທຳນຽມຂອງ LLUCH; ແລະ 1) ປາດຖະໜາການຊ່ວຍເຫຼືອໃນການຊ່ວຍຈ່າຍໃບເກັບເງິນຂອງໂຮງໝໍ; 2) ມີລາຍໄດ້ຢູ່ທີ່ ຫຼື ຕໍ່າກວ່າ 350% ຂອງລະດັບຄວາມທຸກຍາກທີ່ຣັຖບານກາງກຳນົດໄວ້; ແລະ 3) ຜູ້ທີ່ມີຄຸນສົມບັດເໝາະສົມຊຶ່ງສອດຄ່ອງກັບຂໍ້ກຳນົດທີ່ບົ່ງໄວ້ໃນ LLUCH FAP.

<u>ລວມຍອດລາຄາ:</u>

ລວມຍອດການຄິດຄ່າທີ່ອັດຕາເຕັມທີ່ກຳນົດໄວ້ຂອງອົງການສຳລັບການຈັດຫາການບໍລິການເບິ່ງແຍງຄົນເຈັບ ກ່ອນນຳໃຊ້ການຫັກພາສີ.

<u>ແຜນການຊຳລະເງິນແບບມີເງື່ອນໄຂ:</u>

ແຜນການຊຳລະເງິນຕ່າງໆ ຊຶ່ງກຳນົດຂຶ້ນໂດຍຄົນເຈັບທີ່ມີຄຸນສົມບັດເໝາະສົມສຳລັບການຊຳລະແບບຫຼຸດລາຄາຜ່ານໂຄງການ FAP ຈະຖືກຈັດປະເພດເປັນແຜນການຊຳລະເງິນແບບມີເງື່ອນໄຂ. ແຜນການຊຳລະເງິນແບບມີເງື່ອນໄຂຈະບໍ່ຄິດດອກເບັ້ຽ ຫຼື ຍອດຄ້າງຊຳລະທັງໝົດຈາກຄົນເຈັບ/ຜູ້ຮັບປະກັນ. ໃນກໍລະນີທີ່ LLUCH ແລະຄົນເຈັບ/ຜູ້ຮັບປະກັນ ບໍ່ສາມາດບັນລຸຂໍ້ຕົກລົງເງື່ອນໄຂສຳລັບແຜນການຊຳລະເງິນແບບມີເງື່ອນໄຂ, ທາງໂຮງໝໍກໍຈະນຳໃຊ້ສູດປົກກະຕິທີ່ອະທິບາຍໄວ້ໃນປະມວນກົດໝາຍວ່າດ້ວຍສຸຂະພາບແລະຄວາມປອດໄພ (Health & Safety Code) ມາດຕາ 127400 (i), ເພື່ອໃຫ້ສາມາດຈັດຕັ້ງເງື່ອນໄຂສຳລັບ "ແຜນການຊຳລະເງິນທີ່ສົມເຫດຜົນ," ຕາມທີ່ນິຍາມໄວ້ໃນຣັຖບັນຍັດ.

<u>ຄູ່ມືລະດັບຄວາມທຸກຍາກທີ່ຣັຖບານກາງກຳນົດໄວ້ (Federal Poverty Level, FPL):</u>

ຄູ່ມື FPL ກຳນົດເກນການມີສິດເໝາະສົມໂດຍອີງໃສ່ລາຍໄດ້ລວມ ແລະຂະໜາດຂອງຄອບຄົວ ສຳລັບສະຖານະການເບິ່ງແຍງເພື່ອການກຸສົນ ແລະການຊຳລະເງິນແບບຫຼຸດລາຄາ ຕາມທີ່ອະທິບາຍໄວ້ໃນນະໂຍບາຍນີ້. ຄູ່ມື FPL ແມ່ນປັບປຸງເປັນລະຍະໆ ໂດຍກະຊວງສາທາລະນະສຸກແລະປະຊາສົງເຄາະແຫ່ງສະຫະຣັຖອາເມລິກາ.

<u>ຈຳນວນທີ່ຕີລາຄາຢ່າງເປັນທັມ:</u>

ຈຳນວນເງິນທີ່ກຳນົດໄວ້ໂດຍເຈົ້າໜ້າທີ່ລົງທະບຽນຂອງ LLUCH ຊຶ່ງສະແດງອັດຕາລາຄາຕົວຈິງທີ່ສົມເຫດຜົນທີ່ຈະຕ້ອງຈ່າຍສຳລັບການບໍລິການຕ່າງໆ ທີ່ຄົນເຈັບຮັບເອົາຢູ່ທີ່ LLUCH. ເຈົ້າໜ້າທີ່ລົງທະບຽນຈະພະຍາຍາມທີ່ສຸດເພື່ອພັດທະນາ ແລະກຳນົດລາຄາທີ່ເປັນທັມ; ຢ່າງໃດກໍຕາມ, ເຈົ້າໜ້າທີ່ລົງທະບຽນອາດບໍ່ສາມາດຄາດໝາຍໄດ້ຢ່າງຖືກຕ້ອງຫຼາຍສຳລັບຄ່າບໍລິການປິ່ນປົວຕົວຈິງ ຊຶ່ງຜູ້ດູແລ, ໝໍຜູ້ປິ່ນປົວ ຫຼື ຮັກສາຈະເປັນຄົນສັ່ງຕໍ່ໄປ.

<u>ພະແນກການບໍລິການລະຫວ່າງປະເທດ:</u>

ທຸກກໍລະນີທີ່ເປັນຊາວຕ່າງຊາດທີ່ໄດ້ຮັບການເບິ່ງແຍງເພື່ອການກຸສົນ ຕ້ອງໄດ້ຖືກກວດກາຄືນ ແລະຮັບອະນຸມັດໂດຍຄະນະກຳມະການການກຸສົນລະຫວ່າງປະເທດ ໂດຍສອດຄ່ອງກັບເກນງົບປະມານປະຈຳປີຂອງມັນ (ອ້າງອີງ ນະໂຍບາຍ ZNV-51, *ຜົນປະໂຫຍດສຳລັບຄົນຕ່າງຊາດ.*) ກໍລະນີຕ່າງໆ ທີ່ໄດ້ຮັບການກວດກາຄືນ ແລະອະນຸມັດໂດຍຄະນະກຳມະການນັ້ນແມ່ນບໍ່ມີສິດທີ່ຈະໄດ້ຮັບການຊ່ວຍເຫຼືອດ້ານການເງິນຜ່ານໂຄງການ FAP.

<u>ຂໍ້ກຳນົດດ້ານການມີຄຸນສົມບັດສຳລັບນະໂຍບາຍການຊ່ວຍເຫຼືອທາງການເງິນຂອງ LLUCH:</u>

ໂດຍຂຶ້ນຢູ່ກັບຄຸນສົມບັດສ່ວນຕົວຂອງຄົນເຈັບ, ການຊ່ວຍເຫຼືອທາງການເງິນຂອງ LLUCH ອາດຖືກອະນຸມັດໃຫ້ສຳລັບການເບິ່ງແຍງຮັກສາເພື່ອການກຸສົນ ຫຼື ໄດ້ຮັບການຫຼຸດລາຄາບາງສ່ວນ. ຖ້າວ່າ ບຸກຄົນຮ້ອງຂໍເອົາການເບິ່ງແຍງເພື່ອການກຸສົນ ຫຼື ການຊຳລະເງິນແບບຫຼຸດລາຄາ ແຕ່ບົກຜ່ອງບໍ່ໃຫ້ຂໍ້ມູນທີ່ສົມເຫດຜົນແລະຈຳເປັນສຳລັບ LLUCH ເພື່ອເຮັດການຕັດສິນໃຈ,

LLUCH ອາດພິຈາລະນາເບິ່ງຄວາມບົກຜ່ອງນັ້ນດ້ວຍໃນການເຮັດການຕັດສິນໃຈ. ການຊ່ວຍເຫຼືອທາງການເງິນອາດຖືກປະຕິເສດເມື່ອຄົນເຈັບ/ບຸກຄົນທີ່ຮັບຜິດຊອບບໍ່ເຮັດໄດ້ຕາມຂໍ້ກໍານົດດ້ານຄຸນສົມບັດສໍາລັບໂຄງການ FAP ຂອງ LLUCH.

<u>ການບໍລິການທີ່ຈໍາເປັນໃນທາງການແພດ:</u>

ການຊ່ວຍເຫຼືອດ້ານການເງິນພາຍໃຕ້ນະໂຍບາຍນີ້ຈະນໍາໃຊ້ກັບການບໍລິການທີ່ຈໍາເປັນໃນທາງການແພດຕາມທີ່ນິຍາມໄວ້ໃນປະມວນກົດໝາຍວ່າດ້ວຍສະຫວັດດີການ ແລະສະຖາບັນໃນຣັຖຄາລິຟໍເນັຽ (California Welfare & Institutions Code) §14059.5. ການບໍລິການແມ່ນຈໍາເປັນໃນທາງການແພດ ຫຼືມີຄວາມຈໍາເປັນທາງການແພດເມື່ອມີເຫດຜົນສົມຄວນ ແລະຈໍາເປັນເພື່ອປົກປ້ອງຊີວິດ, ເພື່ອປ້ອງກັນການເຈັບປ່ວຍທີ່ສໍາຄັນ ຫຼື ປ້ອງກັນຄວາມພິການທີ່ສໍາຄັນ, ຫຼື ເພື່ອບັນເທົາຄວາມເຈັບປວດຮຸນແຮງ. ການບໍລິການທີ່ບໍ່ລວມຢູ່ໃນຄໍາອະທິບາຍນີ້ ໄດ້ແກ່ ການບໍລິການສະເພາະຊຶ່ງສາມາດບໍາບັດຮັກສາໄດ້ຢ່າງມີປະສິດທິພາບໃນທາງການແພດດ້ວຍວິທີການອື່ນ. ຍົກຕົວຢ່າງແມ່ນ: 1) ການບໍລິການດ້ານຄວາມງາມ ແລະ/ຫຼື ການຜ່າຕັດເສີມຄວາມງາມ; 2) ການບໍລິການເຮັດໝັນ; 3) ການແກ້ໄຂສາຍຕາ; 4) ການບໍາບັດຮັກສາດ້ວຍລັງສີໂປຣຕອນ; 5) ການຮັກສາໂດຍໃຊ້ຫຸ່ນຍົນຊ່ວຍ; 6) ອຸປະກອນເສີມຮ່າງກາຍ/ອຸປະກອນທຽມ; 7) ການຖືພາແທນ; ຫຼື 8) ການບໍລິການອື່ນໆ ທີ່ເຮັດເພື່ອຄວາມສະດວກ ແລະ/ຫຼື ຄວາມສະບາຍຂອງຄົນເຈັບເປັນຫຼັກ.

<u>ຄອບຄົວຂອງຄົນເຈັບ:</u> ສິ່ງຕໍ່ໄປນີ້ຈະຖືກນໍາໃຊ້ກັບທຸກກໍລະນີພາຍໃຕ້ໂຄງການ LLUCH FAP:

1. ສໍາລັບບຸກຄົນທີ່ອາຍຸ 18 ປີຂຶ້ນໄປ, ຄູ່ສົມລົດ, ຄູ່ຄອງທີ່ອາໄສຢູ່ນໍາກັນ, ຕາມທີ່ນິຍາມໄວ້ໃນມາດຕາ 297 ຂອງປະມວນກົດໝາຍຄອບຄົວຂອງຣັຖຄາລິຟໍເນັຽ (California Family Code), ແລະເດັກຜູ້ຢູ່ໃຕ້ການດູແລທີ່ອາຍຸຕໍ່າກວ່າ 21 ປີ, ບໍ່ວ່າຈະອາໄສຢູ່ນໍາກັນໃນເຮືອນ ຫຼືບໍ່ກໍຕາມ.

    1.1 ຄູ່ຄອງທີ່ຢູ່ຮ່ວມກັນ: ສະຖານະການເປັນຄູ່ຄອງທີ່ຢູ່ຮ່ວມນໍາກັນຄວນຖືກກໍານົດໃຫ້ຢູ່ໃນຣັຖຄາລິຟໍເນັຽ ເມື່ອບຸກຄົນທັງສອງນັ້ນຍື່ນຄໍາຮ້ອງເລື່ອງການປະກາດເປັນຄູ່ຄອງທີ່ອາໄສຢູ່ນໍາກັນ (Declaration of Domestic Partnership) ຕໍ່ເລຂາທິການຣັຖ ໂດຍສອດຄ່ອງຕາມພາກສ່ວນນີ້, ໃນເວລາທີ່ຍື່ນເລື່ອງ, ຕ້ອງເຮັດໃຫ້ໄດ້ຕາມຂໍ້ກໍານົດຕໍ່ໄປນີ້:

        a. ທັງສອງຄົນມີບ່ອນຢູ່ອາໄສຮ່ວມກັນ.

        b. ທັງສອງຄົນນັ້ນແມ່ນບໍ່ມີຜູ້ໃດທີ່ແຕ່ງງານກັບຜູ້ອື່ນ ຫຼື ເປັນຄູ່ຄອງໃນເຮືອນອື່ນກັບບຸກຄົນອື່ນຊຶ່ງຍັງບໍ່ໄດ້ຍຸດຕິລົງ, ສິ້ນສຸດລົງ, ຫຼື ຖືກຕັດສິນເປັນໂມຄະ.

        c. ທັງສອງຄົນນັ້ນບໍ່ມີຄວາມສໍາພັນໂດຍທາງສາຍເລືອດ ໃນລັກສະນະທີ່ຈະກີດກັນພວກເຂົາຈາກການແຕ່ງງານກັນໃນຣັຖນີ້.

        d. ທັງສອງຄົນມີອາຍຸຢ່າງໜ້ອຍ 18 ປີ.

        e. ຂໍ້ໃດໜຶ່ງຕໍ່ໄປນີ້:

1) ທັງສອງຄົນແມ່ນຄົນເພດດຽວກັນ

2) ຄົນໜຶ່ງ ຫຼື ທັງສອງຄົນມີເງື່ອນໄຂກົງຕາມເກນການມີສິດເໝາະສົມ ພາຍໃຕ້ບົດທີສອງຂອງກົດໝາຍວ່າດ້ວຍຄວາມໝັ້ນຄົງທາງສັງຄົມ (Social Security Act) ຕາມທີ່ນິຍາມໄວ້ໃນ 42 U.S.C. ມາດຕາ 402(a) ສຳລັບຜົນປະໂຫຍດປະກັນພັຍຜູ້ສູງອາຍຸ ຫຼື ບົດທີສິບຫົກຂອງກົດໝາຍວ່າດ້ວຍຄວາມໝັ້ງຄົງທາງສັງຄົມ (Title XVI of the Social Security Act) ຕາມທີ່ນິຍາມໄວ້ໃນ 42 U.S.C. ມາດຕາ 1381 ສຳລັບບຸກຄົນທີ່ມີອາຍຸຫຼາຍ. ໂດຍບໍ່ຄຳນຶງເຖິງ ຂໍ້ກຳນົດອື່ນໃດຂອງມາດຕານີ້, ບຸກຄົນທີ່ເປັນເພດກົງຂ້າມກັນບໍ່ສາມາດຈັດຕັ້ງສະຖານະການເປັນຄູ່ຄອງທີ່ຢູ່ຮ່ວມກັນໄດ້ ເວັ້ນແຕ່ວ່າ ຄົນໜຶ່ງ ຫຼື ທັງສອງຄົນມີອາຍຸຫຼາຍກວ່າ 62 ປີ.

f. ທັງສອງຄົນມີຄວາມສາມາດໃນການໃຫ້ຄວາມຍິນຍອມສຳລັບການເປັນຄູ່ຄອງຢູ່ຮ່ວມກັນໃນເຮືອນ.

2. ສຳລັບບຸກຄົນທີ່ອາຍຸຕ່ຳກວ່າ 18 ປີ, ພໍ່ແມ່, ຍາດຜູ້ດູແລ ແລະເດັກອື່ນໆ ທີ່ມີອາຍຸຕ່ຳກວ່າ 21 ປີຂອງພໍ່ແມ່ ຫຼື ຍາດຜູ້ດູແລ.

## A. ຄວາມຮັບຜິດຊອບທົ່ວໄປຂອງຄົນເຈັບ

1. ມີຄວາມຈິງໃຈ: ຄົນເຈັບຕ້ອງຈິງໃຈ ແລະພ້ອມໃຫ້ຂໍ້ມູນໃນເວລາທີ່ຖືກຮຽກຮ້ອງໂດຍ LLUCH ໃນຖານະເປັນສ່ວນໜຶ່ງຂອງຂັ້ນຕອນການຊ່ວຍເຫຼືອທາງການເງິນ. ຄົນເຈັບຈຳຕ້ອງໃຫ້ເອກະສານທີ່ຖືກຕ້ອງ ແລະຈິງແທ້ ຊຶ່ງຈຳເປັນຢ່າງສົມເຫດຜົນສຳລັບການຄຸ້ມຄອງການຊ່ວຍເຫຼືອທາງການເງິນຜ່ານໂຄງການຊ່ວຍເຫຼືອໃດໆຂອງຣັຖບານ ຫຼື ຜ່ານໂຄງການ LLUCH FAP. ສະແດງໃຫ້ເຫັນຢ່າງຈິງໃຈ ແລະຕ້ອງເປີດເຜີຍຢ່າງຄົບຖ້ວນສົມບູນກ່ຽວກັບຂໍ້ມູນ ແລະ/ຫຼື ເອກະສານທີ່ຖືກຮຽກຮ້ອງເອົາ.

2. ເຂົ້າຮ່ວມຢ່າງກະຕືລືລົ້ນ ແລະສຳເລັດການກວດກັ່ນຕອງດ້ານການເງິນ: ຄົນເຈັບທີ່ບໍ່ມີປະກັນພັຍທຸກຄົນ ແລະບັນດາຜູ້ທີ່ຮ້ອງຂໍເອົາການຊ່ວຍເຫຼືອດ້ານການເງິນຈະຖືກຮຽກຮ້ອງໃຫ້ເຮັດສຳເລັດຕາມໂຄງການ FAP. ກ່ອນອອກຈາກ LLUCH, ຄົນເຈັບຄວນພິສູດຢັ້ງຢືນວ່າ ຂໍ້ມູນ ຫຼື ເອກະສານເພີ່ມເຕີມຫຍັງແດ່ທີ່ຄົນເຈັບຕ້ອງໄດ້ສົ່ງໃຫ້ແກ່ LLUCH. ຄົນເຈັບຕ້ອງຮັບຜິດຊອບໃນການເຮັດໃຫ້ເຂົ້າໃຈ ແລະປະຕິບັດຕາມໃນການຍື່ນເອກະສານຕາມກຳນົດວັນຂອງ LLUCH ຫຼືຂອງໂຄງການຊ່ວຍເຫຼືອດ້ານການເງິນອື່ນໆ.

3. ຊຳລະເງິນຈາກຖົງຕົນເອງໃນສ່ວນໃດໆ ຫຼື ທັງໝົດເມື່ອຮອດກຳນົດຈ່າຍ: ຄົນເຈັບຄວນຄາດໝາຍ ແລະຈະຕ້ອງຈ່າຍຈຳນວນໃດໆ ຫຼື ຈຳນວນທັງໝົດທີ່ຄົບກຳນົດຊຳລະ ໃນເວລາຮັບການບໍລິການ. ຈຳນວນທີ່ຕ້ອງຈ່າຍຕາມກຳນົດນັ້ນ ລວມເຖິງ, ແຕ່ບໍ່ຈຳກັດແຕ່:

3.1 ຄ່າຈ່າຍຮ່ວມ

3.2 ຄ່າຈ່າຍສ່ວນທຳອິດທີ່ຕ້ອງຈ່າຍເອງ

3.3 ຄ່າມັດຈໍາ

3.4 ຈໍານວນສ່ວນຮ່ວມຈ່າຍຂອງ Medi-Cal/Medicaid

3.5 ຈໍານວນທີ່ຕີລາຄາຢ່າງເປັນທັມ

4. ແບ່ງປັນຄວາມຮັບຜິດຊອບສໍາລັບການເບິ່ງແຍງຮັກສາຂອງໂຮງໝໍ: ຄົນເຈັບແຕ່ລະຄົນມີຄວາມຮັບຜິດຊອບສໍາລັບການເບິ່ງແຍງຮັກສາໃນໂຮງໝໍທີ່ເຂົາເຈົ້າໄດ້ຮັບ. ອັນນີ້ລວມເຖິງ ການຕິດຕາມຂໍເອົາຢາຕາມໃບສັ່ງແພດ ຫຼື ການເບິ່ງແຍງຮັກສາອື່ນໆ ຫຼັງຈາກອອກຈາກໂຮງໝໍ. ນອກຈາກນີ້ ຄົນເຈັບຍັງມີຄວາມຮັບຜິດຊອບໃນການຮັບປະກັນວ່າ ການຈັດການຊໍາລະເງິນຈາກບັນຊີຂອງຄົນເຈັບນັ້ນເຮັດໄດ້ສໍາເລັດຄົບຖ້ວນ. ຄົນເຈັບແຕ່ລະຄົນ ຫຼື ຕົວແທນຄອບຄົວຂອງເຂົາເຈົ້າຈໍາເປັນຕ້ອງໃຫ້ຄວາມຮ່ວມມື ແລະສື່ສານກັບເຈົ້າໜ້າທີ່ຂອງ LLUCH ໃນລະຫວ່າງ ແລະ ຫຼັງຈາກໄດ້ຮັບການບໍລິການ.

## B. ຂັ້ນຕອນແລະຄວາມຮັບຜິດຊອບຂອງໂຮງໝໍ

1. ການມີສິດເໝາະສົມພາຍໃຕ້ໂຄງການ LLUCH FAP ແມ່ນຈັດຕຽມໄວ້ສໍາລັບຄົນເຈັບໃດໆ ທີ່ລາຍໄດ້ຄອບຄົວຂອງເຂົາຕໍ່າກວ່າ 350% ຂອງລະດັບຄວາມທຸກຍາກທີ່ຣັຖບານກາງກໍານົດໄວ້ໃນປັດຈຸບັນ, ຖ້າວ່າບໍ່ມີປະກັນພັຍຝ່າຍທີສາມຄຸ້ມຄອງ ຫຼື, ຖ້າວ່າ ຮັບການຄຸ້ມຄອງຈາກປະກັນພັຍຝ່າຍທີສາມແຕ່ປະກັນບໍ່ສາມາດຊໍາລະເຕັມຈໍານວນໄດ້.

2. ໂຄງການ LLUCH FAP ນໍາໃຊ້ໃບສະໝັກແບບຮວມສະບັບດຽວສໍາລັບຄົນເຈັບ ສໍາລັບທັງການເບິ່ງແຍງເພື່ອການກຸສົນແບບເຕັມສ່ວນ ແລະການຊໍາລະເງິນແບບຫຼຸດລາຄາ. ຂັ້ນຕອນການສະໝັກແມ່ນມີຮູບແບບທີ່ໃຫ້ໂອກາດແກ່ຜູ້ສະໝັກແຕ່ລະຄົນໃນການໄດ້ຮັບຜົນປະໂຫຍດການຊ່ວຍເຫຼືອທາງການເງິນສູດສຸດ ໃນສິ່ງທີ່ເຂົາເຈົ້າມີສິດເໝາະສົມທີ່ຈະໄດ້ຮັບ. ໃບສະໝັກການຊ່ວຍເຫຼືອທາງການເງິນ (Financial Assistance Application, FAA) ໃຫ້ຂໍ້ມູນທີ່ຈໍາເປັນຂອງຄົນເຈັບເພື່ອການພິຈາລະນາຕັດສິນຄຸນສົມບັດເໝາະສົມຂອງຄົນເຈັບໂດຍໂຮງໝໍ ແລະຂໍ້ມູນດັ່ງກ່າວຈະຖືກນໍາໃຊ້ເພື່ອໃຫ້ຄົນເຈັບ ຫຼື ຕົວແທນຄອບຄົວທີ່ມີຄຸນສົມບັດເໝາະສົມທີ່ຈະໄດ້ຮັບການຄຸ້ມຄອງສູງສຸດຊຶ່ງມີໃຫ້ຜ່ານໂຄງການຕ່າງໆ ຂອງຣັຖບານ ແລະ/ຫຼື ພາຍໃຕ້ໂຄງການ LLUCH FAP.

3. ຄົນເຈັບທີ່ມີເງື່ອນໄຂເໝາະສົມອາດມີຄຸນສົມບັດ ແລະສາມາດສະໝັກຂໍຮັບ LLUCH FAP ໄດ້ໂດຍການປະຕິບັດຕາມຄໍາແນະນໍາໃນການສະໝັກ ແລະພະຍາຍາມຢ່າງສົມເຫດຜົນທຸກຄັ້ງໃນການໃຫ້ເອກະສານ ແລະຂໍ້ມູນດ້ານຜົນປະໂຫຍດສຸຂະພາບແກ່ LLUCH ເພື່ອຊ່ວຍໃຫ້ LLUCH ສາມາດພິຈາລະນາຕັດສິນຄຸນສົມບັດຂອງຄົນເຈັບເພື່ອຮັບການຄຸ້ມຄອງພາຍໃຕ້ໂຄງການທີ່ເໝາະສົມໄດ້. ການມີແຕ່ຄຸນສົມບັດເໝາະສົມພຽງລໍາພັງນັ້ນບໍ່ແມ່ນການມີສິດທີ່ຈະມີຄຸນສົມບັດພາຍໃຕ້ໂຄງການ LLUCH FAP. LLUCH ຕ້ອງ

ດຳເນີນການຕາມຂັ້ນຕອນການປະເມີນຜົນຜູ້ສະໝັກ ແລະພິຈາລະນາຕັດສິນການມີຄຸນສົມບັດ ກ່ອນທີ່ຈະອະນຸຍາດໃຫ້ການເບິ່ງແຍງຮັກສາເພື່ອການກຸສົນເຕັມສ່ວນ ຫຼື ການຊຳລະເງິນແບບມີສ່ວນຫຼຸດລາຄາ.

4. ໂຄງການ LLUCH FAP ເພິ່ງພາການຮ່ວມມືກັນຂອງຄົນເຈັບທີ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອບາງສ່ວນ ຫຼື ເຕັມສ່ວນ. ເພື່ອອຳນວຍຄວາມສະດວກໃນການໄດ້ຮັບຂໍ້ມູນດ້ານການເງິນຂອງຄົນເຈັບທີ່ຖືກຕ້ອງແລະກົງເວລາ, LLUCH ຈະນຳໃຊ້ໃບສະໝັກ FAA. ຄົນເຈັບທຸກຄົນທີ່ສະແດງໃຫ້ເຫັນວ່າບໍ່ມີປະກັນພັຍຄຸ້ມຄອງຈາກບໍລິສັດປະກັນພັຍຝ່າຍທີສາມຈະໄດ້ຮັບການໂອກາດໃນການປະກອບການສະໝັກ FAA ໃຫ້ສຳເລັດ.

5. ຄົນເຈັບທີ່ບໍ່ມີປະກັນພັຍຈະໄດ້ຮັບຂໍ້ມູນ, ການຊ່ວຍເຫຼືອ ແລະການສົ່ງຕໍ່ໄປຫາໂຄງການອື່ນໆ ທີ່ຣັຖບານເປັນຜູ້ໃຫ້ທຶນສະໜັບສະໜູນ ສຳລັບສິ່ງທີ່ເຂົາເຈົ້າອາດມີເງື່ອນໄຂໄດ້ຮັບ, ແລະໃຫ້ຂໍ້ມູນກ່ຽວກັບການຄຸ້ມຄອງຂອງປະກັນພັຍຜ່ານ Covered California. ຄົນເຈັບທີ່ບໍ່ມີປະກັນພັຍຍັງຈະໄດ້ຮັບຂໍ້ມູນຕິດຕໍ່ສຳລັບໂຄງການຊ່ວຍເຫຼືອທາງກົດໝາຍສຳລັບຜູ້ບໍລິໂພກໃນທ້ອງຖິ່ນ ຊຶ່ງອາດຊ່ວຍເຫຼືອຄົນເຈັບທີ່ບໍ່ມີປະກັນພັຍໃນການຂໍເອົາການຄຸ້ມຄອງ.

6. ຄົນເຈັບທີ່ມີປະກັນພັຍມູນຄ່າໜ້ອຍ ຊຶ່ງເປັນຜູ້ມີລາຍໄດ້ຕໍ່າກວ່າ 350% ຂອງລະດັບຄວາມທຸກຍາກທີ່ຣັຖບານກາງກຳນົດໄວ້ ແລະຜູ້ທີ່ມີໜີ້ສ່ວນຕົວຫຼັງຈາກທີ່ປະກັນພັຍໄດ້ຈ່າຍໃຫ້ແລ້ວ ກໍອາດມີສິດເພາະສົມທີ່ຈະໄດ້ຮັບການຊ່ວຍເຫຼືອດ້ານການເງິນ. ຄົນເຈັບໃດໆ ທີ່ຮ້ອງຂໍເອົາການຊ່ວຍເຫຼືອທາງການເງິນຈະຖືກຂໍໃຫ້ປະກອບໃບສະໝັກ FAA.

7. ໃບສະໝັກ FAA ຄວນມີຂໍ້ມູນຄົບຖ້ວນສົມບູນທັນທີທີ່ມີຂໍ້ບົ່ງຊີ້ວ່າ ຄົນເຈັບອາດຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອດ້ານການເງິນ. ຟອມໃບສະໝັກອາດປະກອບໃຫ້ສຳເລັດກ່ອນທີ່ຈະຮັບບໍລິການ, ໃນລະຫວ່າງຄົນເຈັບນອນໂຮງໝໍ, ຫຼື ຫຼັງຈາກໄດ້ຮັບການບໍລິການ ແລະຄົນເຈັບໄດ້ອອກຈາກໂຮງໝໍແລ້ວ.

8. ຄວາມສົມບູນຄົບຖ້ວນຂອງຟອມ FAA ຊ່ວຍໃຫ້:

   8.1 ຂໍ້ມູນທີ່ຈຳເປັນສຳລັບ LLUCH ໃນການພິຈາລະນາຕັດສິນວ່າ ຄົນເຈັບມີລາຍໄດ້ພຽງພໍທີ່ຈະຈ່າຍຄ່າບໍລິການ ຫຼືບໍ່;

   8.2 ເອກະສານທີ່ເປັນປະໂຫຍດໃນການຊ່ວຍພິຈາລະນາຕັດສິນການມີຄຸນສົມບັດເພາະສົມສຳລັບການຊ່ວຍເຫຼືອທາງການເງິນ; ແລະ

   8.3 ເປັນວິທີການກວດສອບໃນການບັນທຶກພັນທະຜູກພັນຂອງ LLUCH ໃນການໃຫ້ການຊ່ວຍເຫຼືອດ້ານການເງິນ.

9. ຢ່າງໃດກໍຕາມ, ຟອມ FAA ທີ່ປະກອບຄົບຖ້ວນແລ້ວຈະບໍ່ຈຳເປັນ ຖ້າວ່າ LLUCH, ພາຍໃຕ້ການພິຈາລະນາຂອງມັນແຕ່ພຽງຜູ້ດຽວ, ຕັດສິນວ່າ ເຂົາເຈົ້າມີຂໍ້ມູນດ້ານການເງິນຂອງຄົນເຈັບພຽງພໍແລ້ວທີ່ຈະເຮັດການຕັດສິນໃຈຂັ້ນສຸດທ້າຍໃນການໃຫ້ການຊ່ວຍເຫຼືອທາງການເງິນ. (ເບິ່ງ ພາກສ່ວນ E. ສະຖານະການການເບິ່ງແຍງເພື່ອການກຸສົນພິເສດ)

C. ຄຸນສົມບັດ: ການເບິ່ງແຍງເພື່ອການກຸສົນເຕັມສ່ວນ ແລະການເບິ່ງແຍງເພື່ອການກຸສົນແບບຫຼຸດລາຄາ:

1. ການມີຄຸນສົມບັດສໍາລັບການຊ່ວຍເຫຼືອທາງການເງິນແບບເຕັມສ່ວນ ຫຼື ຫຼຸດລາຄານັ້ນຈະຖືກພິຈາລະນາຕັດສິນພຽງຢ່າງດຽວໂດຍຄວາມສາມາດໃນການຈ່າຍຂອງຄົນເຈັບ ແລະ/ຫຼື ຕົວແທນຂອງຄອບຄົວຄົນເຈັບ. ການມີ ຄຸນສົມບັດສໍາລັບການຊ່ວຍເຫຼືອທາງການເງິນຈະບໍ່ອີງໃສ່ໃນທາງໃດກໍຕາມໃນເລື່ອງອາຍຸ, ເພດ, ລັກສະນະຕົວຕົນທາງເພດ, ຄວາມມັກຊອບທາງເພດ, ຊົນເຜົ່າ, ຊາດກໍາເນີດ, ສະຖານະການເປັນທະຫານຜ່ານເສິກ, ຄວາມພິການ, ຫຼື ສາສະໜາ. ໃນຂະນະທີ່ການຊ່ວຍເຫຼືອທາງການເງິນຈະບໍ່ຖືກຈັດຫາໃຫ້ໂດຍອີງໃສ່ການ ຈໍາແນກບຸກຄົນ ຫຼື ຕາມອໍາເພີໃຈ, LLUCH ຈະຄົງຮັກສາການມີອໍານາດຕັດສິນໃຈເອງເຕັມສ່ວນ, ໂດຍສອດຄ່ອງກັບກົດໝາຍ ແລະກົດຂໍ້ບັງຄັບ, ເພື່ອວາງກົດເກນການມີສິດເໝາະສົມ ແລະພິຈາລະນາຕັດສິນເມື່ອຄົນເຈັບໄດ້ໃຫ້ຫຼັກຖານການມີຄຸນສົມບັດທີ່ເໝາະສົມຢ່າງພຽງພໍສໍາລັບການຊ່ວຍເຫຼືອທາງການເງິນ.

2. LLUCH ຈະໃຫ້ການຊ່ວຍເຫຼືອໂດຍກົງໃນລະຫວ່າງການລົງທະບຽນແກ່ຄົນເຈັບ ຫຼື ຕົວແທນຄອບຄົວຂອງຄົນເຈັບເພື່ອອໍານວຍຄວາມສະດວກໃນການປະກອບຟອມ FAA ໃຫ້ສໍາເລັດ. ອາດມີການຮຽກຮ້ອງເອົາການປະກອບຟອມ FAA ໃຫ້ສໍາເລັດ ພ້ອມກັບຂໍ້ມູນເພີ່ມເຕີມໃດໆ ຫຼື ທັງໝົດ ເພື່ອສະແດງເຖິງການມີຄຸນສົມບັດເໝາະສົມສໍາລັບການຊ່ວຍເຫຼືອທາງການເງິນ.

3. ເປັນທີ່ຍອມຮັບວ່າ LLUCH ໃຫ້ບໍລິການເບິ່ງແຍງແບບສຸກເສີນ ແລະຮີບດ່ວນທີ່ມີຄວາມຮຸນແຮງໃນລະດັບຕໍ່າຢ່າງຫຼວງຫຼາຍແກ່ຊຸມຊົນທ້ອງຖິ່ນ, ແຕ່ກໍໄດ້ມີຄວາມພະຍາຍາມທີ່ຈະຫຼຸດຜ່ອນພາລະດ້ານການສະໝັກໃນບາງກໍລະນີ. ເຖິງແມ່ນວ່າ ການຄິດຄ່າເບິ່ງແຍງປິ່ນປົວສຸກເສີນອາດຂ້ອນຂ້າງສູງ, ແຕ່ກໍລະນີດັ່ງກ່າວນັ້ນແມ່ນມີໜ້ອຍກວ່າຫຼາຍໆ ກໍລະນີທີ່ມີການປິ່ນປົວແບບເລັກນ້ອຍ. ເມື່ອການຄິດຄ່າປິ່ນປົວແບບສຸກເສີນ ຫຼື ຮີບດ່ວນນັ້ນມີມູນຄ່າໜ້ອຍກວ່າ $5,000, ຄົນເຈັບ ຫຼື ຕົວແທນຄອບຄົວຂອງຄົນເຈັບອາດພຽງແຕ່ຕ້ອງສົ່ງໃບສະໝັກ FAA ທີ່ປະກອບຄົບຖ້ວນແລະລົງລາຍເຊັນແລ້ວເທົ່ານັ້ນ. ການສະແດງໃບເສຍພາສີ ຫຼື ສິ້ນເຊັກຄ່າຈ້າງອາດບໍ່ຈໍາເປັນໃນກໍລະນີດັ່ງກ່າວ. ຢ່າງໃດກໍຕາມ, ໃນກໍລະນີທີ່ການຄິດຄ່າກາຍຈໍານວນ $5,000, ຄົນເຈັບ ຫຼື ຕົວແທນຄອບຄົວຂອງຄົນເຈັບຕ້ອງໃຫ້ເອກະສານຫຼັກຖານຢັ້ງຢືນລາຍໄດ້ໃນຮູບແບບຂອງໃບແຈ້ງເສຍພາສີລາຍໄດ້ຂອງຣັຖບານກາງ ຫຼື ສໍາເນົາຂອງໃບສິ້ນເຊັກຄ່າຈ້າງຢ່າງໜ້ອຍສອງໃບ.

4. ມັນອາດຈໍາເປັນສໍາລັບຄົນເຈັບ ແລະ/ຫຼື ຕົວແທນຄອບຄົວທີ່ຈະສົ່ງເອກະສານສະໜັບສະໜູນໃນພາຍຫຼັງໃຫ້ແກ່ LLUCH. ຄົນເຈັບຈະໄດ້ຮັບຄໍາແນະນໍາໃນການສົ່ງເອກະສານສະໜັບສະໜູນ ໃນເວລາທີ່ການສະໝັກ FAA ສໍາເລັດແລ້ວ. ຄົນເຈັບ ແລະ/ຫຼື ຕົວແທນຄອບຄົວທີ່ຮ້ອງຂໍເອົາການຊ່ວຍເຫຼືອໃນການເຮັດໃຫ້ໄດ້ຕາມພັນທະຜູກມັດດ້ານການເງິນຂອງເຂົາເຈົ້າກັບ LLUCH ຄວນຈະພະຍາຍາມຫຼາຍທີ່ສຸດທີ່ຈະຈັດຫາຂໍ້ມູນທີ່ຈໍາເປັນໃຫ້ແກ່ LLUCH ເພື່ອໃຫ້ສາມາດເຮັດການພິຈາລະນາຕັດສິນການມີຄຸນສົມບັດເໝາະສົມສໍາລັບການຊ່ວຍເຫຼືອທາງການເງິນ. ໃບສະໝັກ FAA ແລະເອກະສານເພີ່ມເຕີມທີ່ຮຽກຮ້ອງເອົານັ້ນຕ້ອງໄດ້ຖືກສົ່ງໄປທີ່ຫ້ອງການ Patient Business Office. ສະຖານທີ່ຕັ້ງຂອງຫ້ອງການນີ້ຈະລະບຸໄວ້ຢ່າງຊັດເຈນໃນຄໍາແນະນໍາການສະໝັກ.

5. LLUCH ຈະຈັດຫາເຈົ້າໜ້າທີ່ຜູ້ທີ່ຜ່ານການຝຶກອົບຮົມແລ້ວເພື່ອຊ່ວຍກວດກາຄືນຄວາມສົມບູນຄົບຖ້ວນ ແລະຄວາມຖືກຕ້ອງຂອງ FAA. ການກວດກາຄືນການສະໝັກຈະຕ້ອງເຮັດໃຫ້ສໍາເລັດໄວເທົ່າທີ່ເປັນໄປໄດ້ ໂດຍພິຈາລະນາເຖິງຄວາມຈໍາເປັນທີ່ຕ້ອງໄດ້ຮັບການຕອບຮັບຢ່າງກົງເວລາຂອງຄົນເຈັບ.

6. ປັດໃຈຕ່າງໆ ທີ່ຈະພິຈາລະນາ ໃນເວລາຂອງການພິຈາລະນາວ່າ ບຸກຄົນມີຄຸນສົມບັດເໝາະສົມສໍາລັບການຊ່ວຍເຫຼືອທາງການເງິນ ຫຼືບໍ່ ໂດຍສອດຄ່ອງກັບນະໂຍບາຍນີ້ ອາດລວມເຖິງ:

    6.1 ລາຍໄດ້ຂອງຄອບຄົວອີງຕາມໃບແຈ້ງເສຍພາສີລາຍໄດ້ຂອງຣັຖບານກາງ, ສິ້ນເຊັກຄ່າຈ້າງຫຼ້າສຸດ, ຫຼື ຂໍ້ມູນທີ່ກ່ຽວຂ້ອງອື່ນໆ ທີ່ຈັດຫາໃຫ້ໂດຍຄົນເຈັບ ໃນກໍລະນີທີ່ຂາດເອກະສານດັ່ງກ່າວ; ແລະ

    6.2 ຂະໜາດຄອບຄົວ

7. ການມີຄຸນສົມບັດໄດ້ຮັບການຊ່ວຍເຫຼືອທາງການເງິນອາດຖືກອະນຸຍາດໃຫ້ສໍາລັບການເບິ່ງແຍງເພື່ອການກຸສົນ ຫຼື ການຊໍາລະເງິນແບບຫຼຸດລາຄາ ໂດຍຂຶ້ນກັບລະດັບການມີຄຸນສົມບັດຂອງຄົນເຈັບ ຫຼື ຕົວແທນຄອບຄົວ ຕາມທີ່ນິຍາມໄວ້ໃນເກນການມີຄຸນສົມບັດຂອງໂຄງການ FAP ນີ້. ການພິຈາລະນາຕັດສິນໃຫ້ການຊ່ວຍເຫຼືອທາງການເງິນຈະຖືກດໍາເນີນການເຮັດໂດຍເຈົ້າໜ້າທີ່ຂອງ LLUCH ທີ່ໄດ້ຮັບອະນຸມັດແລ້ວເທົ່ານັ້ນ ໂດຍສອດຄ່ອງກັບລະດັບການມອບໝາຍອໍານາດຕໍ່ໄປນີ້:

| | | |
|---|---|---|
| 7.1 | ຜູ້ຈັດການຂອງ Patient Business Office: | ບັນຊີໜ້ອຍກວ່າ $50,000 |
| 7.2 | ຜູ້ອໍານວຍການຫ້ອງການ Patient Business Office: | ບັນຊີໜ້ອຍກວ່າ $100,000 |
| 7.3 | ຜູ້ອໍານວຍການບໍລິຫານ Business Office: | ບັນຊີໜ້ອຍກວ່າ $250,000 |
| 7.4 | ຮອງປະທານ, ຝ່າຍຮອບລາຍໄດ້: | ບັນຊີຫຼາຍກວ່າ $250,000 |

8. ເມື່ອຕັດສິນແລ້ວ, ການມີຄຸນສົມບັດເໝາະສົມສໍາລັບການຊ່ວຍເຫຼືອທາງການເງິນຈະນໍາໃຊ້ກັບການບໍລິການສະເພາະ ແລະວັນທີຂອງການບໍລິການທີ່ໄດ້ສະໝັກຂໍໂດຍຄົນເຈັບ ແລະ/ຫຼື ຕົວແທນຄອບຄົວ. ໃນກໍລະນີຂອງການສືບຕໍ່ການເບິ່ງແຍງປິ່ນປົວທີ່ກ່ຽວພັນກັບການວິນິດໄສຄົນເຈັບ ຊຶ່ງຈໍາເປັນຕ້ອງໄດ້ຮັບບໍລິການທີ່ກ່ຽວຂ້ອງ ແລະຕໍ່ເນື່ອງ, LLUCH, ພາຍໃຕ້ການພິຈາລະນາຂອງຕົນແຕ່ພຽງຜູ້ດຽວ, ອາດໃຫ້ການປິ່ນປົວຕໍ່ເນື່ອງແບບກໍລະນີດຽວ ຊຶ່ງຢູ່ໃນເກນການມີຄຸນສົມບັດເໝາະສົມສໍາລັບການບໍລິການຕໍ່ເນື່ອງທັງໝົດທີ່ຈັດຫາໃຫ້ໂດຍ LLUCH. ຍອດຄ້າງຊໍາລະກ່ອນໜ້ານີ້ໃນບັນຊີຂອງຄົນເຈັບ ໃນເວລາທີ່ມີການພິຈາລະນາຕັດສິນການມີຄຸນສົມບັດເໝາະສົມໂດຍ LLUCH ຈະຖືກລວມເອົາໄວ້ໂດຍຖືວ່າມີສິດເໝາະສົມທີ່ຈະຕີມູນຄ່າໜີ້ເປັນສູນພາຍໃຕ້ການພິຈາລະນາຕັດສິນແຕ່ພຽງຜູ້ດຽວຂອງຄະນະບໍລິຫານຂອງ LLUCH.

9. ພັນທະຜູກມັດຂອງຄົນເຈັບສໍາລັບການຈ່າຍຄ່າສ່ວນຮ່ວມຈ່າຍຂອງ Medi-Cal/Medicaid ຈະບໍ່ຖືກຍົກເລີກພາຍໃຕ້ສະຖານະການໃດໆ ກໍຕາມ. ຢ່າງໃດກໍຕາມ, ຫຼັງຈາກທີ່ມີການເກັບຄ່າສ່ວນຮ່ວມຈ່າຍຂອງຄົນເຈັບແລ້ວ, ຍອດທີ່ຍັງບໍ່ໄດ້ຈ່າຍອື່ນໆ ຫຼື ບໍ່ຢູ່ພາຍໃຕ້ການຄຸ້ມຄອງ ຊຶ່ງກ່ຽວພັນກັບຄ່າສ່ວນຮ່ວມຈ່າຍຂອງ Medi-Cal/Medicaid ຂອງຄົນເຈັບອາດໄດ້ຮັບການພິຈາລະນາໃຫ້ຢູ່ພາຍໃຕ້ການເບິ່ງແຍງເພື່ອການກຸສົນ.

10. ບັນດາຄົນເຈັບທີ່ມີລາຍໄດ້ລະຫວ່າງ 201% ຫາ 350% ຂອງລະດັບ FPL ຈະບໍ່ຕ້ອງຈ່າຍຫຼາຍກວ່າຈໍານວນທີ່ Medicare ຈະຈ່າຍໃຫ້ໂດຍທົ່ວໄປສໍາລັບການບໍລິການໃນຮູບແບບທີ່ຄ້າຍຄືກັນ. ອັນນີ້ຈະນໍາໃຊ້ກັບການບໍລິການທີ່ຈໍາເປັນໃນທາງການແພດສໍາລັບຄົນເຈັບນອນໂຮງໝໍ, ຄົນເຈັບນອກໂຮງໝໍ, ການບໍລິການຊໍ້າອີກ ແລະການບໍລິການສຸກເສີນຕ່າງໆ ທີ່ຈັດຫາໃຫ້ໂດຍ LLUCH.

11. ຄົນເຈັບທີ່ມີສິດໄດ້ຮັບ FAP ຈະຖືກຄິດຄ່າໜ້ອຍກວ່າລວມຍອດລາຄາ.

D. ການຊຳລະເງິນເພື່ອການກຸສົນແບບເຕັມສ່ວນ ແລະແບບຫຼຸດລາຄາ - ລະດັບການມີຄຸນສົມບັດດ້ານລາຍໄດ້ສຳລັບຄົນເຈັບທີ່ບໍ່ມີປະກັນພັຍ

1. ຖ້າວ່າ ລາຍໄດ້ຄອບຄົວຂອງຄົນເຈັບທີ່ບໍ່ມີປະກັນພັຍແມ່ນ 200% ຫຼື ຕ່ຳກວ່າລະດັບລາຍໄດ້ຕາມເກນຄວາມທຸກຍາກທີ່ກຳນົດໄວ້, ອີງຕາມຄູ່ມື FPL ໃນປັດຈຸບັນ, ແລະ ຄົນເຈັບມີເງື່ອນໄຂກົງຕາມຂໍ້ກຳນົດດ້ານການມີຄຸນສົມບັດ ສຳລັບການຊ່ວຍເຫຼືອທາງການເງິນອື່ນໆ ທັງໝົດ, ຄົນເຈັບກໍຈະມີສິດໄດ້ຮັບການເບິ່ງແຍງເພື່ອການກຸສົນແບບເຕັມສ່ວນ.

2. ຖ້າວ່າ ລາຍໄດ້ຄອບຄົວຂອງຄົນເຈັບຢູ່ລະຫວ່າງ 201% ຫາ 350% ຂອງລະດັບລາຍໄດ້ຕາມເກນຄວາມທຸກຍາກທີ່ກຳນົດໄວ້, ອີງຕາມຄູ່ມື FPL ໃນປັດຈຸບັນ, ແລະ ຄົນເຈັບມີເງື່ອນໄຂກົງຕາມຂໍ້ກຳນົດດ້ານການມີຄຸນສົມບັດ ສຳລັບການຊ່ວຍເຫຼືອທາງການເງິນອື່ນໆ ທັງໝົດ, ສິ່ງຕໍ່ໄປນີ້ຈະຖືກນຳໃຊ້:

2.1 ຖ້າວ່າ ການບໍລິການບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງຜູ້ຈ່າຍຝ່າຍທີສາມໃດໆ ສະນັ້ນ ໂດຍທົ່ວໄປແລ້ວ ຄົນເຈັບກໍຈະຕ້ອງຮັບຜິດຊອບຈ່າຍຄ່າເຕັມຈຳນວນທີ່ຄິດໄລ່, ພັນທະດ້ານການຈ່າຍເງິນຂອງຄົນເຈັບຈະຖືກຄິດເປັນເປີເຊັນຂອງຈຳນວນອັດຕາຂອງ Medicare (ອັດຕາຈ່າຍ Medicare ເຕັມຈຳນວນ, ເຊັ່ນ ດັດຊະນີຄ່າຈ້າງ, IME, DME, ອື່ນໆ, ແລະພັນທະໃນການຈ່າຍເງິນຂອງຄົນເຈັບ) ໂຄງການ Medicare ຈະຈ່າຍໃຫ້ສຳລັບການບໍລິການ ຖ້າວ່າ ຄົນເຈັບເປັນຜູ້ຮັບຜົນປະໂຫຍດຂອງ Medicare. ຈຳນວນເປີເຊັນຕົວຈິງທີ່ຄົນເຈັບໃດໆ ຕ້ອງຈ່າຍເອງຈະຄິດໄລ່ອີງຕາມເກນໃນຕາຕະລາງ 1 ຂ້າງລຸ່ມນີ້:

**ຕາຕະລາງ 1**

**ຕາຕະລາງການຫຼຸດລາຄາທີ່ປັບໂດຍອັດຕະໂນມັດ**

| ຈຳນວນເປີເຊັນປະເພດຄອບຄົວຕາມເກນຂອງ FPL | ອັດຕາຫຼຸດລາຄາຂອງ M/Care ທີ່ອະນຸຍາດໃຫ້ | ການຈ່າຍຈາກຖົງຕົນເອງຂອງຄົນເຈັບ ຄິດເປັນເປີເຊັນ (ຂອງ M/Care) |
|---|---|---|
| | | |
| 201 – 260% | 75% | 25% |
| 261 – 320% | 50% | 50% |
| 321 – 350% | 25% | 75% |

3. ຖ້າວ່າ ລາຍໄດ້ຄອບຄົວຂອງຄົນເຈັບຫຼາຍກວ່າ 350% ຂອງລະດັບລາຍໄດ້ຕາມເກນຄວາມທຸກຍາກທີ່ກໍານົດໄວ້, ອີງຕາມຄູ່ມື FPL ໃນປັດຈຸບັນ, ແລະ ຄົນເຈັບມີເງື່ອນໄຂກົງຕາມຂໍ້ກໍານົດດ້ານການມີຄຸນສົມບັດສໍາລັບການຊ່ວຍເຫຼືອທາງການເງິນອື່ນໆ ທັງໝົດ, ສິ່ງຕໍ່ໄປນີ້ຈະຖືກນໍາໃຊ້:

3.1 ຖ້າວ່າ ການບໍລິການບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງຜູ້ຈ່າຍຝ່າຍທີສາມໃດໆ ສະນັ້ນ ໂດຍທົ່ວໄປແລ້ວຄົນເຈັບກໍຈະຕ້ອງຮັບຜິດຊອບຈ່າຍຄ່າເຕັມຈໍານວນທີ່ຄິດໄລ່, ພັນທະໃນການຈ່າຍຍອດລວມຂອງຄົນເຈັບຈະເປັນຈໍານວນເທົ່າກັບ 100% ຂອງຈໍານວນລວມ (ອັດຕາຈ່າຍ Medicare ເຕັມຈໍານວນ, ເຊັ່ນ ດັດຊະນີຄ່າຈ້າງ, IME, DME, ອື່ນໆ, ແລະພັນທະໃນການຈ່າຍເງິນຂອງຄົນເຈັບ) ໂຄງການ Medicare ຈະຈ່າຍໃຫ້ສໍາລັບການບໍລິການ ຖ້າວ່າ ຄົນເຈັບເປັນຜູ້ຮັບຜົນປະໂຫຍດຂອງ Medicare.

## ຄົນເຈັບທີ່ມີປະກັນພັຍ

1. ຖ້າວ່າ ລາຍໄດ້ຄອບຄົວຂອງຄົນເຈັບທີ່ມີປະກັນພັຍຢູ່ລະຫວ່າງ 201% ຫາ 350% ຂອງລະດັບລາຍໄດ້ຕາມເກນຄວາມທຸກຍາກທີ່ກໍານົດໄວ້, ອີງຕາມຄູ່ມື FPL ໃນປັດຈຸບັນ, ແລະ ຄົນເຈັບມີເງື່ອນໄຂກົງຕາມຂໍ້ກໍານົດດ້ານການມີຄຸນສົມບັດສໍາລັບການຊ່ວຍເຫຼືອທາງການເງິນອື່ນໆ ທັງໝົດ, ສິ່ງຕໍ່ໄປນີ້ຈະຖືກນໍາໃຊ້:

1.1 ສໍາລັບການບໍລິການຕ່າງໆ ທີ່ຄົນເຈັບໄດ້ຮັບ ຊຶ່ງຢູ່ພາຍໃຕ້ປະກັນພັຍຄຸ້ມຄອງຂອງຜູ້ຈ່າຍຝ່າຍທີສາມດັ່ງນັ້ນ ຄົນເຈັບຈະຮັບຜິດຊອບສະເພາະພຽງໜຶ່ງສ່ວນຂອງໃບບິນ (ເຊັ່ນ ຄ່າຈ່າຍສ່ວນທໍາອິດ ຫຼື ຄ່າຈ່າຍຮ່ວມ), ຈາກນັ້ນ ພັນທະໃນການຈ່າຍເງິນຂອງຄົນເຈັບຈະເປັນຈໍານວນເທົ່າກັບຈໍານວນສ່ວນຕ່າງລະຫວ່າງຈໍານວນທີ່ບໍລິສັດປະກັນພັຍຈະຈ່າຍໃຫ້ ແລະຈໍານວນທີ່ Medicare ຈະຈ່າຍໃຫ້ (ອັດຕາຈ່າຍ Medicare ເຕັມຈໍານວນ, ເຊັ່ນ ດັດຊະນີຄ່າຈ້າງ, IME, DME, ອື່ນໆ, ແລະພັນທະໃນການຈ່າຍເງິນຂອງຄົນເຈັບ) ຖ້າວ່າ ຄົນເຈັບເປັນຜູ້ຮັບຜົນປະໂຫຍດຂອງ Medicare (ເຊັ່ນ ຖ້າວ່າ ບໍລິສັດປະກັນພັຍໄດ້ຈ່າຍໃຫ້ຫຼາຍກວ່າຈໍານວນຂອງ Medicare ທີ່ອະນຸຍາດໃຫ້, ຄົນເຈັບກໍຈະບໍ່ມີໜີ້ເພີ່ມເຕີມອີກ, ແຕ່ຖ້າວ່າ ບໍລິສັດປະກັນພັຍຂອງຄົນເຈັບໄດ້ຈ່າຍໃຫ້ໜ້ອຍກວ່າຈໍານວນທີ່ອະນຸຍາດໃຫ້ຂອງ Medicare, ຄົນເຈັບກໍຈະຕ້ອງຈ່າຍສ່ວນຕ່າງລະຫວ່າງຈໍານວນທີ່ບໍລິສັດປະກັນພັຍຈ່າຍ ແລະຈໍານວນທີ່ Medicare ອະນຸຍາດຈ່າຍໃຫ້).

2. ຖ້າວ່າ ລາຍໄດ້ຄອບຄົວຂອງຄົນເຈັບແມ່ນຫຼາຍກວ່າ 350% ຂອງລະດັບລາຍໄດ້ຕາມເກນຄວາມທຸກຍາກທີ່ກໍານົດໄວ້, ອີງຕາມຄູ່ມື FPL ໃນປັດຈຸບັນ, ສິ່ງຕໍ່ໄປນີ້ຈະຖືກນໍາໃຊ້:

2.1 ສໍາລັບການບໍລິການຕ່າງໆ ທີ່ຄົນເຈັບໄດ້ຮັບ ຊຶ່ງຢູ່ພາຍໃຕ້ປະກັນພັຍຄຸ້ມຄອງຂອງຜູ້ຈ່າຍຝ່າຍທີສາມດັ່ງນັ້ນ ຄົນເຈັບຈະຮັບຜິດຊອບສະເພາະພຽງໜຶ່ງສ່ວນຂອງໃບບິນ (ເຊັ່ນ ຄ່າຈ່າຍສ່ວນທໍາອິດ ຫຼື ຄ່າຈ່າຍຮ່ວມ), ຈາກນັ້ນ ພັນທະໃນການຈ່າຍເງິນຂອງຄົນເຈັບຈະເປັນຈໍານວນເທົ່າກັບຈໍານວນສ່ວນຕ່າງລະຫວ່າງຈໍານວນທີ່ບໍລິສັດປະກັນພັຍຈະຈ່າຍໃຫ້ ແລະຈໍານວນລວມທີ່ Medicare ຈະຈ່າຍ

ໃຫ້ສຳລັບຄ່າບໍລິການ, ບວກຊາວເປີເຊັນ (20%). ຍົກຕົວຢ່າງ, ຖ້າວ່າ ບໍລິສັດປະກັນພັຍໄດ້ຈ່າຍໃຫ້ຫຼາຍກວ່າຈຳນວນທີ່ອະນຸຍາດໃຫ້ຂອງ Medicare ບວກກັບ 20%, ຄົນເຈັບກໍຈະບໍ່ມີໜີ້ເພີ່ມເຕີມອີກ, ແຕ່ຖ້າວ່າ ບໍລິສັດປະກັນພັຍຂອງຄົນເຈັບໄດ້ຈ່າຍໃຫ້ໜ້ອຍກວ່າຈຳນວນທີ່ອະນຸຍາດໃຫ້ຂອງ Medicare ບວກກັບ 20%, ຄົນເຈັບກໍຈະຕ້ອງຈ່າຍສ່ວນຕ່າງລະຫວ່າງຈຳນວນທີ່ບໍລິສັດປະກັນພັຍຈ່າຍ ແລະຈຳນວນທີ່ເທົ່າກັບຈຳນວນທີ່ Medicare ອະນຸຍາດຈ່າຍໃຫ້ ບວກກັບ 20%.

E. ສະຖານະການການເບິ່ງແຍງເພື່ອການກຸສົນພິເສດ

1. ຖ້າວ່າ ຄົນເຈັບຖືກຕັດສິນໂດຍເຈົ້າໜ້າທີ່ລົງທະບຽນຂອງ LLUCH ວ່າເປັນຄົນບໍ່ມີເຮືອນຢູ່ ແລະບໍ່ມີປະກັນພັຍທີສາມຄຸ້ມຄອງ, ເຂົາ/ລາວ ກໍຈະຖືວ່າມີເງື່ອນໄຂເໝາະສົມໂດຍອັດຕະໂນມັດສຳລັບການເບິ່ງແຍງປິ່ນປົວເພື່ອການກຸສົນແບບເຕັມສ່ວນ.

2. ບັນດາຄົນເຈັບທີ່ເສັຽຊີວິດ ຊຶ່ງເປັນຜູ້ບໍ່ມີປະກັນພັຍຄຸ້ມຄອງທີ່ເປັນຜູ້ຈ່າຍທີສາມ, ບໍ່ມີຊັບສິນທີ່ສາມາດລະບຸໄດ້ ຫຼື ເປັນຜູ້ທີ່ບໍ່ຕ້ອງມີການພິສູດພິໄນກຳ, ຈະຖືກຖືວ່າມີເງື່ອນໄຂເໝາະສົມໂດຍອັດຕະໂນມັດສຳລັບການເບິ່ງແຍງປິ່ນປົວເພື່ອການກຸສົນແບບເຕັມສ່ວນ.

3. ບັນດາຄົນເຈັບທີ່ຖືກປະກາດວ່າລົ້ມລະລາຍໂດຍຄຳສັ່ງສານຂອງຣັຖບານກາງດ້ວຍເຫດລົ້ມລະລາຍພາຍໃນສິບສອງ (12) ເດືອນຜ່ານມາ ຈະຖືກຖືວ່າມີເງື່ອນໄຂເໝາະສົມໂດຍອັດຕະໂນມັດສຳລັບການເບິ່ງແຍງປິ່ນປົວເພື່ອການກຸສົນແບບເຕັມສ່ວນ. ຄົນເຈັບ ຫຼື ຕົວແທນຄອບຄົວຈະຕ້ອງໃຫ້ສຳເນົາເອກະສານຄຳສັ່ງສານໃນຖານະເປັນເອກະສານສ່ວນໜຶ່ງຂອງການສະໝັກຂອງເຂົາເຈົ້າ.

4. ບັນດາຄົນເຈັບທີ່ຮັບການປິ່ນປົວໃນພະແນກສຸກເສີນ, ຊຶ່ງເປັນຜູ້ທີ່ LLUCH ບໍ່ສາມາດອອກໃບແຈ້ງໜີ້ໄດ້, ບັນຊີຂອງເຂົາອາດຖືກຕີມູນຄ່າໜີ້ເປັນສູນໄດ້ໃນຖານະຢູ່ພາຍໃຕ້ການເບິ່ງແຍງເພື່ອການກຸສົນແບບເຕັມສ່ວນ (ເຊັ່ນ ຄົນເຈັບອອກຈາກໂຮງໝໍກ່ອນທີ່ຈະໄດ້ຮັບຂໍ້ມູນໃບແຈ້ງໜີ້). ສະພາບການຕ່າງໆ ດັ່ງກ່າວຈະຖືກລະບຸໄວ້ໃນໝາຍເຫດໃນບັນຊີຂອງຄົນເຈັບໃນຖານະເປັນສ່ວນສຳຄັນຂອງເອກະສານ.

5. LLUCH ຖືວ່າ ຄົນເຈັບເຫຼົ່ານັ້ນທີ່ມີເງື່ອນໄຂໄດ້ຮັບສຳລັບໂຄງການຊ່ວຍເຫຼືອຜູ້ມີລາຍໄດ້ຕ່ຳທີ່ໄດ້ຮັບທຶນສະໜັບສະໜູນຈາກຣັຖບານ (ເຊັ່ນ Medi-Cal/Medicaid, California Children's Services, ແລະໂຄງການຜູ້ມີລາຍໄດ້ຕ່ຳອື່ນໆ ຂອງຣັດ ຫຼື ໃນທ້ອງຖິ່ນ ທີ່ສາມາດນຳໃຊ້ໄດ້) ຈະເປັນຜູ້ມີເງື່ອນໄຂໄດ້ຮັບໂດຍອັດຕະໂນມັດສຳລັບການເບິ່ງແຍງເພື່ອການກຸສົນ ເມື່ອໂຄງການຂອງຣັຖບານບໍ່ສາມາດຈ່າຍເງິນໃຫ້ໄດ້. ຍົກຕົວຢ່າງ, ບັນດາຄົນເຈັບທີ່ມີຄຸນສົມບັດໄດ້ຮັບ Medi-Cal/Medicaid ແລະໂຄງການອື່ນໆ ຂອງຣັຖບານໃນການຮັບໃຊ້ຕາມຄວາມຈຳເປັນຂອງຄົນເຈັບທີ່ມີລາຍໄດ້ຕ່ຳ (ເຊັ່ນ CHDP ແລະ CCS ບາງຢ່າງ) ຊຶ່ງໃນກໍລະນີທີ່ໂຄງການບໍ່ສາມາດຈ່າຍເງິນໃຫ້ໄດ້ສຳລັບການບໍລິການທັງໝົດ ຫຼື ຈຳນວນວັນໃນລະຫວ່າງທີ່ນອນປິ່ນປົວໃນໂຮງໝໍ, ແມ່ນມີເງື່ອນໄຂທີ່ຈະໄດ້ຮັບການຄຸ້ມຄອງຈາກໂຄງການຊ່ວຍເຫຼືອທາງການເງິນ. ພາຍໃຕ້ໂຄງການ FAP ຂອງ LLUCH, ປະເພດເຫຼົ່ານີ້ທີ່ມີຍອດຄ້າງໃນບັນຊີຄົນເຈັບທີ່ບໍ່ສາມາດເບີກໄດ້ ຈະມີສິດ

ຖືກຕີບັນຊີເປັນສູນໃນຖານະຢູ່ໃນການເບິ່ງແຍງເພື່ອການກຸສົນ. ໂດຍສະເພາະທີ່ລວມຢູ່ໃນການເບິ່ງແຍງເພື່ອການກຸສົນ ໄດ້ແກ່ ການຄິດຄ່າຕ່າງໆ ທີ່ກ່ຽວພັນກັບການນອນປິ່ນປົວທີ່ຖືກປະຕິເສດ ຫຼື ຈໍານວນວັນຂອງການປິ່ນປົວທີ່ຖືກປະຕິເສດ. ການປະຕິເສດຄໍາຮ້ອງຂໍເອົາການອະນຸຍາດການປິ່ນປົວ (Treatment Authorization Request, TAR) ທັງໝົດທີ່ມີຕໍ່ Medi-Cal/Medicaid ແລະຄົນເຈັບອື່ນໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງໂຄງການຊ່ວຍເຫຼືອຜູ້ມີລາຍໄດ້ຕໍ່າທີ່ມີຄຸນສົມບັດເໝາະສົມ, ແລະການປະຕິເສດອື່ນໆ (ເຊັ່ນ ການຄຸ້ມຄອງແບບຈໍາກັດ) ແມ່ນຈະຖືກຈັດໃຫ້ຢູ່ໃນປະເພດການເບິ່ງແຍງເພື່ອການກຸສົນ.

6. ການປະເມີນຜົນໃດໆ ສໍາລັບການຊ່ວຍເຫຼືອທາງການເງິນທີ່ກ່ຽວພັນກັບຄົນເຈັບທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງໂຄງການ Medicare ຕ້ອງລວມເອົາການວິເຄາະທີ່ສົມເຫດຜົນສໍາລັບຊັບສິນທັງໝົດຂອງຄົນເຈັບ, ໜີ້ສິນ,ລາຍໄດ້ ແລະຄ່າໃຊ້ຈ່າຍຕ່າງໆ, ກ່ອນທີ່ຈະກວດສອບການມີຄຸນສົມບັດເໝາະສົມສໍາລັບໂຄງການຊ່ວຍເຫຼືອທາງການເງິນ. ການປະເມີນຜົນສໍາລັບການຊ່ວຍເຫຼືອທາງການເງິນດັ່ງກ່າວຕ້ອງໄດ້ເຮັດກ່ອນທີ່ຈະຮັບບໍລິການສໍາເລັດຄົບຖ້ວນຈາກ LLUCH.

   6.1 ໂດຍບໍ່ຄໍານຶງເຖິງສິ່ງທີ່ເກີດຂຶ້ນກ່ອນ, ສ່ວນໜຶ່ງຂອງບັນຊີຄົນເຈັບຂອງ Medicare (a) ຊຶ່ງຄົນເຈັບຕ້ອງຮັບຜິດຊອບດ້ານການເງິນ (ຈໍານວນຄ່າປະກັນພັຍຮ່ວມ ແລະຄ່າຮັບຜິດຊອບສ່ວນທໍາອິດ), (b) ຊຶ່ງບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງປະກັນພັຍ ຫຼື ຜູ້ຈ່າຍອື່ນໆ ລວມເຖິງ Medi-Cal/Medicaid, ແລະ (c) ຊຶ່ງເບີກຄືນບໍ່ໄດ້ໂດຍ Medicare ໃນຖານະເປັນໜີ້ສູນ, ກໍອາດຖືກຈັດປະເພດໃຫ້ຢູ່ໃນການເບິ່ງແຍງເພື່ອການກຸສົນ ຖ້າວ່າ:

      a. ຄົນເຈັບເປັນຜູ້ຮັບຜົນປະໂຫຍດພາຍໃຕ້ Medi-Cal/Medicaid ຫຼື ໂຄງການອື່ນທີ່ຮັບໃຊ້ຕາມຄວາມຕ້ອງການດ້ານການເບິ່ງແຍງສຸຂະພາບຂອງຄົນເຈັບທີ່ມີລາຍໄດ້ຕໍ່າ; ຫຼື

      b. ຖ້າບໍ່ດັ່ງນັ້ນ ຄົນເຈັບຕ້ອງມີຄຸນສົມບັດເໝາະສົມສໍາລັບການຊ່ວຍເຫຼືອທາງການເງິນພາຍໃຕ້ນະໂຍບາຍນີ້ ແລະສະເພາະໃນຂອບເຂດຂອງການຕີລາຄາໜີ້ເປັນສູນຊຶ່ງກໍານົດໄວ້ພາຍໃຕ້ນະໂຍບາຍນີ້.

7. ຄົນເຈັບທີ່ບໍ່ມີປະກັນພັຍໃດໆ ຜູ້ທີ່ລາຍໄດ້ຂອງເຂົາຫຼາຍກວ່າ 350% ຂອງລະດັບ FPL ໃນປັດຈຸບັນ ແລະປະສົບກັບເຫດການທີ່ຈະສົ່ງຜົນເສັຽຫາຍຮ້າຍແຮງຕໍ່ການປິ່ນປົວອາດຖືວ່າມີເງື່ອນໄຂເໝາະສົມສໍາລັບການຊ່ວຍເຫຼືອທາງການເງິນ. ຄົນເຈັບດັ່ງກ່າວທີ່ມີລາຍໄດ້ສູງກວ່ານີ້ແມ່ນບໍ່ມີຄຸນສົມບັດທີ່ຈະໄດ້ຮັບການເບິ່ງແຍງເພື່ອການກຸສົນແບບເຕັມສ່ວນ ຫຼື ການເບິ່ງແຍງແບບຫຼຸດລາຄາ. ຢ່າງໃດກໍຕາມ, ການພິຈາລະນາເຫດການທີ່ຈະສົ່ງຜົນເສັຽຫາຍຮ້າຍແຮງຕໍ່ການປິ່ນປົວອາດເຮັດໄດ້ຕາມແຕ່ລະກໍລະນີ. ການພິຈາລະນາຕັດສິນກໍລະນີເຫດການທີ່ຈະສົ່ງຜົນເສັຽຫາຍຮ້າຍແຮງຕໍ່ການປິ່ນປົວຄວນຈະອີງຕາມຈໍານວນເງິນທີ່ຄົນເຈັບຕ້ອງຮັບຜິດຊອບຕາມໃບບິນ, ແລະການພິຈາລະນາເຖິງລາຍໄດ້ ແລະຊັບສິນຂອງຄົນເຈັບ ຕາມທີ່ຖືກລາຍງານໄວ້ໃນເວລາເກີດເຫດການ. ການບໍລິຫານຈັດການຄວນຈະນໍາໃຊ້ການພິຈາລະນາທີ່ສົມເຫດຜົນໃນການເຮັດການຕັດສິນທີ່ອີງໃສ່ເຫດການທີ່ຈະສົ່ງຜົນເສັຽຫາຍຮ້າຍແຮງຕໍ່ການປິ່ນປົວ. ຕາມແນວທາງທົ່ວໄປ, ບັນຊີໃດໆ ທີ່ຄົນເຈັບຕ້ອງຮັບຜິດຊອບຈ່າຍຄ່າບໍລິການທີ່ໄດ້ຮັບທີ່ມີຈໍານວນກາຍ $200,000 ອາດໄດ້ຮັບການພິຈາລະນາວ່າມີເງື່ອນໄຂ ເໝາະສົມໃນຖານະເປັນເຫດການທີ່ຈະສົ່ງຜົນເສັຽຫາຍຮ້າຍແຮງຕໍ່ການປິ່ນປົວ.

8. ບັນຊີໃດໆ ທີ່ຖືກສົ່ງກັບຄືນຫາ LLUCH ຈາກອົງການທວງໜີ້ ຊຶ່ງໄດ້ພິຈາລະນາຕັດສິນວ່າ ຄົນເຈັບ ຫຼື ຕົວແທນຄອບຄົວບໍ່ມີແຫຼ່ງຊັບສິນທີ່ຈະຈ່າຍໃບບິນຂອງເຂົາ ຫຼື ຂອງລາວ, ອາດຖືວ່າມີເງື່ອນໄຂເໝາະສົມສໍາລັບການເບິ່ງແຍງເພື່ອການກຸສົນ. ເອກະສານຂອງຄົນເຈັບ ຫຼື ຕົວແທນຄອບຄົວກ່ຽວກັບການບໍ່ສາມາດຈ່າຍຄ່າບໍລິການຕ່າງໆ ຈະຖືກເກັບຮັກສາໄວ້ໃນແຟ້ມເອກະສານປະເພດການເບິ່ງແຍງເພື່ອການກຸສົນ.

F. ເກນສໍາລັບການກໍານົດມອບໝາຍໃໝ່ຈາກສະຖານະໜີ້ສູນໄປເປັນການເບິ່ງແຍງເພື່ອການກຸສົນ

1. ອົງການທວງໜີ້ຈາກພາຍນອກທັງໝົດທີ່ມີສັນຍາກັບ LLUCH ໃນການດໍາເນີນການຕິດຕາມບັນຊີ ແລະ/ຫຼື ທວງໜີ້ສູນ ຈະນໍາໃຊ້ເກນຕໍ່ໄປນີ້ເພື່ອລະບຸຫາການປ່ຽນແປງສະຖານະຂອງຄົນເຈັບຈາກໜີ້ສູນເປັນການເບິ່ງແຍງເພື່ອການກຸສົນ:

1.1 ບັນຊີຄົນເຈັບຕ້ອງບໍ່ມີປະກັນໄພທີ່ນໍາໃຊ້ໄດ້ (ລວມເຖິງໂຄງການຄຸ້ມຄອງຂອງຣັຖບານ ຫຼື ຜູ້ຈ່າຍຝ່າຍທີສາມອື່ນໆ); ແລະ

1.2 ຄົນເຈັບ ຫຼື ຕົວແທນຄອບຄົວຕ້ອງມີເຄຣດິດ ແລະ/ຫຼື ຄະແນນຄວາມປະພຶດທີ່ຢູ່ໃນລະດັບຊ່ວງຕໍ່າທີ່ສຸດລໍາດັບ 25 ເປີເຊັນຂອງຄະແນນເຄຣດິດສໍາລັບວິທີການປະເມີນເຄຣດິດໃດໆ ທີ່ນໍາໃຊ້; ແລະ

1.3 ຄົນເຈັບ ຫຼື ຕົວແທນຄອບຄົວບໍ່ໄດ້ຊໍາລະເງິນພາຍໃນ 150 ວັນ ນັບແຕ່ມອບໝາຍໃຫ້ອົງການທວງໜີ້;

1.4 ອົງການທວງໜີ້ໄດ້ຕັດສິນວ່າ ຄົນເຈັບ/ຕົວແທນຄອບຄົວແມ່ນບໍ່ສາມາດຊໍາລະເງິນ; ແລະ/ຫຼື

1.5 ຄົນເຈັບ ຫຼື ຕົວແທນຄອບຄົວບໍ່ມີເລກປະກັນສັງຄົມທີ່ໃຊ້ການໄດ້ ແລະ/ຫຼື ທີ່ຢູ່ອາໄສໃນຣັຖທີ່ຖືກຕ້ອງເພື່ອນໍາໃຊ້ໃນການພິຈາລະນາຄະແນນເຄຣດິດ.

2. ບັນຊີທັງໝົດທີ່ໄດ້ຮັບຄືນຈາກອົງການທວງໜີ້ສໍາລັບການກໍານົດມອບໝາຍໃໝ່ຈາກໜີ້ສູນເປັນການເບິ່ງແຍງເພື່ອການກຸສົນ ຈະໄດ້ຮັບການປະເມີນຜົນໂດຍເຈົ້າໜ້າທີ່ພະແນກດູແລໃບເກັບຄ່າຂອງ LLUCH ກ່ອນທີ່ຈະຈັດການກໍານົດປະເພດໃໝ່ໃດໆ ພາຍໃນລະບົບບັນຊີ ແລະບັນທຶກຂອງໂຮງໝໍ.

G. ການແຈ້ງຕໍ່ຄົນເຈັບ

1. ເມື່ອໄດ້ເຮັດການພິຈາລະນາຕັດສິນການມີເງື່ອນໄຂໄດ້ຮັບແລ້ວ, ຈົດໝາຍລະບຸສະຖານະການພິຈາລະນາຕັດສິນກໍຈະຖືກສົ່ງໃຫ້ແກ່ຄົນເຈັບ ຫຼື ຕົວແທນຄອບຄົວ. ຈົດໝາຍແຈ້ງສະຖານະການຕັດສິນຈະລະບຸສິ່ງໃດໜຶ່ງຕໍ່ໄປນີ້:

1.1 ການອະນຸມັດ: ຈົດໝາຍຈະລະບຸວ່າ ບັນຊີໄດ້ຮັບການອະນຸມັດແລ້ວ, ລະດັບຂອງການອະນຸມັດ ແລະ ຍອດຄົງຄ້າງໃດໆ ຂອງຄົນເຈັບ. ຂໍ້ມູນ ແລະຄໍາແນະນໍາສໍາລັບການປະຕິບັດຕໍ່ໄປໃດໆ ສໍາລັບຄົນເຈັບກໍຈະລວມຢູ່ໃນນັ້ນດ້ວຍ.

1.2 ການປະຕິເສດ: ເຫດຜົນສໍາລັບການປະຕິເສດການມີເງື່ອນໄຂໄດ້ຮັບຊຶ່ງອີງຕາມ FAA ຈະຖືກອະທິບາຍໃຫ້ແກ່ຄົນເຈັບ. ຍອດໜີ້ຄົງຄ້າງໃດໆ ຂອງຄົນເຈັບກໍຈະຖືກລະບຸໄວ້ດ້ວຍ. ຂໍ້ມູນຕິດຕໍ່ ແລະຄໍາແນະນໍາຕ່າງໆ ສໍາລັບການຊໍາລະເງິນກໍຈະລວມຢູ່ໃນນັ້ນດ້ວຍ.

1.3 ລະງັບຊົ່ວຄາວ: ຜູ້ສະໝັກຈະໄດ້ຮັບແຈ້ງວ່າ ເປັນຫຍັງໃບສະໝັກ FAA ຈຶ່ງບໍ່ຄົບຖ້ວນສົມບູນ. ຂໍ້ມູນຍອດຄົງຄ້າງທັງໝົດຈະຖືກລະບຸໄວ້ ແລະຈະມີໜັງສືແຈ້ງການຮຽກຮ້ອງໃຫ້ຄົນເຈັບ ຫຼື ຕົວແທນຄອບຄົວສົ່ງຂໍ້ມູນໃຫ້ແກ່ LLUCH.

H. ແຜນການຊໍາລະເງິນແບບມີເງື່ອນໄຂ

1. ເມື່ອ LLUCH ໄດ້ເຮັດການຕັດສິນເລື່ອງການຫຼຸດລາຄາແລ້ວ, ຄົນເຈັບຈະມີທາງເລືອກໃນການຈ່າຍຍອດຄົງຄ້າງທີ່ຄົບກໍານົດຈ່າຍສ່ວນໃດໜຶ່ງ ຫຼື ທັງໝົດເປັນກ້ອນໃຫຍ່ເທື່ອດຽວ, ຫຼື ຜ່ານເງື່ອນໄຂການຊໍາລະຕາມຕາຕະລາງໃນແຜນການຊໍາລະເງິນແບບມີເງື່ອນໄຂ.

2. LLUCH ຈະປຶກສາຫາລືກ່ຽວກັບທາງເລືອກແຜນການຊໍາລະເງິນກັບຄົນເຈັບແຕ່ລະຄົນທີ່ຮ້ອງຂໍເອົາການຈັດການສໍາລັບເງື່ອນໄຂການຊໍາລະເງິນ. ແຜນການຊໍາລະເງິນສ່ວນບຸກຄົນຈະຖືກຈັດການໂດຍອີງຕາມຄວາມສາມາດຂອງຄົນເຈັບ ເພື່ອໃຫ້ບັນລຸເງື່ອນໄຂຂອງການຊໍາລະເງິນຢ່າງມີປະສິດທິພາບ. ໃນຖານະເປັນແນວທາງທົ່ວໄປ, ແຜນການຊໍາລະເງິນຈະມີລະຍະເວລາບໍ່ດົນເກີນ 12 ເດືອນ.

3. LLUCH ຈະຕໍ່ຮອງດ້ວຍຄວາມສຸດຈະລິດໃຈກັບຄົນເຈັບ; ແຕ່ຢ່າງໃດກໍຕາມ ບໍ່ມີພັນທະບັງຄັບໃນການຍອມຮັບເງື່ອນໄຂການຊໍາລະເງິນທີ່ສະເໜີໂດຍຄົນເຈັບ. ໃນກໍລະນີທີ່ LLUCH ແລະຄົນເຈັບໃດໜຶ່ງ ຫຼື ຜູ້ຮັບປະກັນບໍ່ສາມາດບັນລຸຂໍ້ຕົກລົງກັນໃນການຈັດຕັ້ງແຜນການຊໍາລະເງິນແບບມີເງື່ອນໄຂ, ທາງໂຮງໝໍຈະນໍາໃຊ້ສູດ "ແຜນການຊໍາລະເງິນທີ່ສົມເຫດຜົນ" ຕາມທີ່ນິຍາມໄວ້ໃນປະມວນກົດໝາຍວ່າດ້ວຍສຸຂະພາບແລະຄວາມປອດໄພ ມາດຕາ 127400 (i) ເປັນພື້ນຖານສໍາລັບແຜນການຊໍາລະເງິນ. "ແຜນການຊໍາລະເງິນທີ່ສົມເຫດຜົນ" ໝາຍເຖິງ ການຊໍາລະເງິນທຸກເດືອນ ຊຶ່ງບໍ່ເກີນ 10 ເປີເຊັນ ຂອງລາຍໄດ້ຄອບຄົວຂອງຄົນເຈັບ ຕໍ່ໜຶ່ງເດືອນ, ບໍ່ລວມ ການຫັກຫຼຸດຕ່າງໆ ສໍາລັບຄ່າໃຊ້ຈ່າຍທີ່ຈໍາເປັນໃນຊີວິດປະຈໍາວັນ. ເພື່ອທີ່ຈະນໍາໃຊ້ສູດ "ແຜນການຊໍາລະເງິນທີ່ສົມເຫດຜົນ", LLUCH ຈະເກັບຂໍ້ມູນຂອງຄົນເຈັບກ່ຽວກັບລາຍໄດ້ ແລະ "ຄ່າໃຊ້ຈ່າຍທີ່ຈໍາເປັນໃນຊີວິດປະຈໍາວັນ" ໂດຍສອດຄ່ອງກັບຣັຖບັນຍັດ. LLUCH ຈະນໍາໃຊ້ຟອມທີ່ເປັນມາດຕະຖານໃນການເກັບກໍາຂໍ້ມູນດັ່ງກ່າວ. ຄົນເຈັບແຕ່ລະຄົນ ຫຼື ຜູ້ຮັບປະກັນທີ່ຊອກຫາແຜນການຊໍາລະເງິນໂດຍການນໍາໃຊ້ສູດ "ແຜນການຊໍາລະເງິນທີ່ສົມເຫດຜົນ" ຈະຕ້ອງສົ່ງຂໍ້ມູນກ່ຽວກັບລາຍໄດ້ຄອບຄົວ ແລະຄ່າໃຊ້ຈ່າຍຕ່າງໆ ຕາມທີ່ຖືກຮຽກຮ້ອງເອົາ, ເວັ້ນແຕ່ວ່າ ການຮຽກຮ້ອງເອົາຂໍ້ມູນນັ້ນຖືກຍົກເລີກໂດຍຕົວແທນຂອງ LLUCH.

4. ບໍ່ມີການເກັບດອກເບັ້ຍກັບບັນຊີຄົນເຈັບທີ່ມີຄຸນສົມບັດສໍາລັບລະຍະເວລາຂອງແຜນການຊໍາລະເງິນໃດໆ ທີ່ຈັດການພາຍໃຕ້ຂໍ້ກໍານົດຂອງ FAP.

5. ເມື່ອແຜນການໄດ້ຮັບອະນຸມັດແລ້ວໂດຍ LLUCH, ການບົກຜ່ອງບໍ່ຈ່າຍຕາມທີ່ຄົບກໍານົດຈ່າຍຕິດຕໍ່ກັນ 90 ວັນ ຈະສົ່ງຜົນໃຫ້ເກີດການຜິດນັດໃນແຜນການຊໍາລະເງິນ. ຄົນເຈັບ ຫຼື ຜູ້ຮັບປະກັນມີໜ້າທີ່ຮັບຜິດຊອບໃນການຕິດຕໍ່ຫາຫ້ອງການທຸລະກິດຄົນເຈັບຂອງ LLUCH ຖ້າວ່າ ສະພາບການມີການປ່ຽນແປງໄປ ແລະບໍ່ສາມາດເຮັດໄດ້ຕາມເງື່ອນໄຂຂອງແຜນການຊໍາລະເງິນ. ຢ່າງໃດກໍຕາມ, ໃນກໍລະນີຂອງການຜິດນັດບໍ່ຊໍາລະຕາມແຜນການຊໍາລະເງິນ, LLUCH ຈະພະຍາຍາມຢ່າງສົມເຫດຜົນທີ່ຈະຕິດຕໍ່ຫາຄົນເຈັບ ຫຼື ຕົວແທນຄອບຄົວຂອງເຂົາໂດຍທາງໂທຣະສັບ ແລະ ໃຫ້ແຈ້ງການເລື່ອງການຜິດນັດເປັນລາຍລັກອັກສອນ. ຄົນເຈັບຈະມີໂອກາດທີ່ຈະຕໍ່ຮອງໃໝ່ໃນການຂະຫຍາຍເວລາໃນແຜນການຊໍາລະເງິນ ແລະອາດເຮັດແນວນັ້ນໄດ້ໂດຍການຕິດຕໍ່ຕົວແທນຂອງຫ້ອງການທຸລະກິດຄົນເຈັບພາຍໃນສິບສີ່ (14) ວັນ ນັບແຕ່ວັນທີຂອງໜັງສືແຈ້ງການກ່ຽວກັບການຜິດນັດໃນແຜນການຊໍາລະເງິນແບບຂະຫຍາຍເວລາ. ຖ້າວ່າ ຄົນເຈັບບົກຜ່ອງບໍ່ຮຽກຮ້ອງຂໍເອົາການຕໍ່ຮອງໃໝ່ສໍາລັບແຜນການຊໍາລະເງິນແບບຂະຫຍາຍເວລາ ພາຍໃນສິບສີ່ (14) ວັນ, ແຜນການຊໍາລະເງິນຈະຖືກຖືວ່າຢູ່ໃນສະຖານະບໍ່ໃຫ້ຄວາມຮ່ວມມື ແລະບັນຊີກໍຈະຕົກຢູ່ໃນສະຖານະຖືກທວງໜີ້.

6. ຖ້າເປັນໄປໄດ້, ການຊໍາລະເງິນທຸກຄັ້ງຄວນດໍາເນີນການຜ່ານຜູ້ໃຫ້ບໍລິການໂອນເງິນແບບອີເລັກໂຕຣນິກ (Electronic Funds Transfer, EFT) ຈາກພາຍນອກ. ຢ່າງໃດກໍຕາມ, ໃນກໍລະນີທີ່ຄົນເຈັບ ຫຼື ຕົວແທນຄອບຄົວສະແດງຄວາມຕັ້ງໃຈຈິງທີ່ຈະຈ່າຍພາຍໃຕ້ແຜນການຊໍາລະເງິນ, ໂດຍບໍ່ຕ້ອງຜ່ານຜູ້ໃຫ້ບໍລິການ EFT ຈາກພາຍນອກ, LLUCH ຈະພະຍາຍາມໃຫ້ຄວາມສະດວກແກ່ຄໍາຮ້ອງຂໍດັ່ງກ່າວ ໂດຍກໍານົດໃຫ້ຄົນເຈັບຈ່າຍຜ່ານແຜນການຊໍາລະເງິນທີ່ຂະຫຍາຍເວລາໃຫ້ແບບເປັນເງິນສົດ, ເຊັກ, ການສັ່ງຈ່າຍເງິນ ຫຼື ບັດເຄຣດິດ.

## I. ການແກ້ໄຂຂໍ້ຂັດແຍ້ງ

1. ໃນກໍລະນີທີ່ເກີດຂໍ້ຂັດແຍ້ງຂຶ້ນເລື່ອງການມີຄຸນສົມບັດເໝາະສົມສໍາລັບໂຄງການຊ່ວຍເຫຼືອທາງການເງິນ, ຄົນເຈັບສາມາດຍື່ນຄໍາອຸທອນເປັນລາຍລັກອັກສອນເພື່ອຂໍໃຫ້ມີການພິຈາລະນາຕໍ່ LLUCH. ໜັງສືອຸທອນຄວນປະກອບດ້ວຍຄໍາອະທິບາຍທີ່ຄົບຖ້ວນກ່ຽວກັບຂໍ້ໂຕ້ແຍ້ງຂອງຄົນເຈັບ ແລະເຫດຜົນທີ່ຂໍໃຫ້ມີການພິຈາລະນາຄືນໃໝ່. ເອກະສານທີ່ກ່ຽວຂ້ອງເພີ່ມເຕີມໃດໆ ຫຼື ທັງໝົດທີ່ຈະຊ່ວຍສະໜັບສະໜູນການຮຽກຮ້ອງຂອງຄົນເຈັບຄວນຄັດຕິດໄປກັບໜັງສືອຸທອນດ້ວຍ.

2. ຄໍາອຸທອນໃດໆ ຫຼື ທັງໝົດ ຈະຖືກກວດກາຄືນໂດຍຜູ້ອໍານວຍການບໍລິຫານຂອງຫ້ອງການທຸລະກິດຄົນເຈັບ. ຜູ້ອໍານວຍການບໍລິຫານຈະພິຈາລະນາຄໍາຖະແຫຼງຂໍ້ໂຕ້ແຍ້ງທີ່ເປັນລາຍລັກອັກສອນທັງໝົດ ພ້ອມດ້ວຍເອກະສານຄັດຕິດໃດໆ. ຫຼັງຈາກກວດກາຄືນຄໍາຮ້ອງຂອງຄົນເຈັບສໍາເລັດແລ້ວ, ຜູ້ອໍານວຍການບໍລິຫານຈະໃຫ້ຄໍາອະທິບາຍເປັນລາຍລັກອັກສອນເຖິງສິ່ງທີ່ຄົ້ນພົບ ແລະການພິຈາລະນາຕັດສິນ. ການພິຈາລະນາຕັດສິນທັງໝົດໂດຍຜູ້ອໍານວຍການບໍລິຫານຈະຖືວ່າເປັນຄໍາຕັດສິນສຸດທ້າຍ. ຈະບໍ່ມີການອຸທອນຕໍ່ໄປອີກ.

## J. ການແຈ້ງຕໍ່ສາທາລະນະ

1. LLUCH ຈະຕິດປະກາດແຈ້ງການໃຫ້ປະຊາຊົນຮູ້ກ່ຽວກັບໂຄງການ FAP, FAA, ບົດສະຫຼຸບໃນພາສາທີ່ເຂົ້າໃຈງ່າຍ, ແລະນະໂຍບາຍການຮຽກເກັບເງິນ ແລະການທວງໜີ້. ແຈ້ງການດັ່ງກ່າວນີ້ຈະຖືກຕິດໄວ້ໃນເຂດບໍລິການຂອງ LLUCH ສໍາລັບຄົນເຈັບໃນໂຮງໝໍ ແລະຄົນເຈັບນອກໂຮງໝໍໃນຈໍານວນຫຼວງຫຼາຍ, ລວມເຖິງ ແຕ່ບໍ່ຈໍາກັດຢູ່ແຕ່, ພະແນກສຸກເສີນ, ຫ້ອງການສົ່ງໃບບິນ, ບ່ອນລົງທະບຽນຮັບຄົນເຈັບໃນໂຮງໝໍ ແລະຄົນເຈັບນອກໂຮງໝໍ ຫຼື ບໍລິເວນລໍຖ້າທົ່ວໄປສໍາລັບຄົນເຈັບຂອງ LLUCH. ແຈ້ງການຕ່າງໆ ຍັງຈະຖືກຕິດໄວ້ທີ່ສະຖານທີ່ໃດໆ ທີ່ຄົນເຈັບອາດໄປຈ່າຍໃບບິນຂອງເຂົາເຈົ້າ. ແຈ້ງການຕ່າງໆ ຈະລວມມີ ຂໍ້ມູນຕິດຕໍ່ ກ່ຽວກັບວິທີການຂໍເອົາຂໍ້ມູນເພີ່ມເຕີມເລື່ອງການຊ່ວຍເຫຼືອທາງການເງິນ ແລະ ສະຖານທີ່ທີ່ຈະໄປສະໝັກຂໍຮັບການຊ່ວຍເຫຼືອດັ່ງກ່າວ.

   1.1 ແຈ້ງການເຫຼົ່ານີ້ຈະຖືກຕິດປະກາດໄວ້ໃນພາສາອັງກິດ ແລະສະເປນ ແລະພາສາອື່ນໆ ຕາມທີ່ກໍານົດໄວ້ໃນ IRC ມາດຕາ 501(r).

2. ນອກຈາກນີ້, ນະໂຍບາຍການຊ່ວຍເຫຼືອທາງການເງິນ, ການສະໝັກຂໍຮັບການຊ່ວຍເຫຼືອທາງການເງິນ, ບົດສະຫຼຸບໃນພາສາທີ່ເຂົ້າໃຈງ່າຍ, ແລະນະໂຍບາຍການຮຽກເກັບເງິນ ແລະການທວງໜີ້ ຈະມີໃຫ້ຢູ່ທີ່ເວັບໄຊ https://medical-center.lomalindahealth.org/financial-assistance#lluch.

3. ສໍາເນົາເຈັ້ຽຂອງເອກະສານທີ່ອ້າງອີງຂ້າງເທິງນີ້ ຈະມີໃຫ້ແກ່ສາທາລະນະ ຕາມການຮ້ອງຂໍທີ່ສົມເຫດຜົນໂດຍບໍ່ເສັຽຄ່າ. LLUCH ຈະຕອບຮັບຕໍ່ຄໍາຮ້ອງຂໍດັ່ງກ່າວໃນລັກສະນະທີ່ກົງຕໍ່ເວລາ.

K. ການລາຍງານການເບິ່ງແຍງເພື່ອການກຸສົນແບບເຕັມສ່ວນ ແລະການຊໍາລະເງິນແບບຫຼຸດລາຄາ

1. LLUCH ຈະລາຍງານການເບິ່ງແຍງເພື່ອການກຸສົນຕົວຈິງ ໂດຍສອດຄ່ອງກັບຂໍ້ກໍານົດດ້ານລະບຽບຂໍ້ບັງຄັບຂອງຫ້ອງການວາງແຜນແລະພັດທະນາສຸຂະພາບທົ່ວລັດ (Office of Statewide Health Planning and Development, OSHPD) ຕາມທີ່ບົ່ງໄວ້ໃນຄູ່ມືບັນຊີແລະການລາຍງານສໍາລັບໂຮງໝໍ (Accounting and Reporting Manual for Hospitals), ສະບັບພິມຄັ້ງທີສອງ. ເພື່ອເປັນການປະຕິບັດຕາມກົດຂໍ້ບັງຄັບ, LLUCH ຈະຄົງຮັກສາເອກະສານທີ່ເປັນລາຍລັກອັກສອນຕ່າງໆ ກ່ຽວກັບເກນການເບິ່ງແຍງເພື່ອການກຸສົນ, ແລະສໍາລັບບັນດາຄົນເຈັບແຕ່ລະຄົນ, LLUCH ຈະຮັກສາເອກະສານທີ່ເປັນລາຍລັກອັກສອນກ່ຽວກັບການພິຈາລະນາຕັດສິນດ້ານການເບິ່ງແຍງເພື່ອການກຸສົນທັງໝົດ. ຕາມທີ່ກໍານົດໄວ້ໂດຍ OSHPD, ການເບິ່ງແຍງເພື່ອການກຸສົນທີ່ຈັດຫາໃຫ້ແກ່ບັນດາຄົນເຈັບຈະຖືກບັນທຶກໄວ້ໂດຍມີພື້ນຖານເປັນການເກັບເງິນຕົວຈິງສໍາລັບການບໍລິການຕ່າງໆ ທີ່ໃຫ້.

2. LLUCH ຈະຈັດຫາສໍາເນົາຂອງໂຄງການ FAP ໃຫ້ແກ່ OSHPD ຊຶ່ງລວມມີ ນະໂຍບາຍດ້ານການເບິ່ງແຍງເພື່ອການກຸສົນ ແລະການຊໍາລະເງິນແບບຫຼຸດລາຄາຢູ່ໃນເອກະສານສະບັບດຽວ. ໂຄງການ FAP ຍັງປະກອບດ້ວຍ: 1) ລະບຽບການທັງໝົດດ້ານການມີເງື່ອນໄຂເໝາະສົມ ແລະຄຸນສົມບັດສໍາລັບຄົນເຈັບ; 2) ການສະໝັກຮວມສໍາລັບການເບິ່ງແຍງເພື່ອການກຸສົນແບບເຕັມສ່ວນ ແລະການຊໍາລະເງິນແບບຫຼຸດລາຄາ; ແລະ 3) ຂັ້ນຕອນການກວດກາຄືນສໍາລັບທັງການເບິ່ງແຍງເພື່ອການກຸສົນແບບເຕັມສ່ວນ ແລະການຊໍາລະ

ເງິນແບບຫຼຸດລາຄາ. ເອກະສານເຫຼົ່ານີ້ຈະຖືກຈັດຫາໃຫ້ແກ່ OSHPD ທຸກສອງປີ ຫຼື ເມື່ອໃດກໍຕາມ ທີ່ມີການປ່ຽນແປງທີ່ສໍາຄັນ.

L. ອື່ນໆ

1. ການຮັກສາຄວາມລັບ - ຄວນຈື່ໄວ້ວ່າ ຄວາມຕ້ອງການຈໍາເປັນສໍາລັບການຊ່ວຍເຫຼືອທາງການເງິນແມ່ນເລື່ອງທີ່ອ່ອນໄຫວ ແລະເປັນເລື່ອງສ່ວນຕົວເລິກຊຶ້ງສໍາລັບຜູ້ຮັບບໍລິການ. ການຮັກສາຄວາມລັບຂອງຄໍາຮ້ອງຕ່າງໆ, ຂໍ້ມູນ ແລະການໃຫ້ທຶນນັ້ນຈະຖືກເກັບຮັກສາໄວ້ເພື່ອທຸກຄົນທີ່ຊອກຫາ ຫຼື ໄດ້ຮັບການຊ່ວຍເຫຼືອທາງການເງິນ. ການອົບຮົມເຈົ້າໜ້າທີ່ ແລະການຄັດເລືອກເຈົ້າໜ້າທີ່ຜູ້ທີ່ຈະປະຕິບັດວຽກຕາມນະໂຍບາຍນີ້ຈະຖືກຊີ້ນໍາພາຍໃຕ້ຄຸນຄ່າເຫຼົ່ານີ້.

2. ຂໍ້ກໍານົດໂດຍສຸດຈະລິດ - LLUCH ດໍາເນີນການຈັດການດ້ານການຊ່ວຍເຫຼືອທາງການເງິນສໍາລັບຄົນເຈັບທີ່ມີຄຸນສົມບັດເໝາະສົມໂດຍສຸດຈະລິດ ແລະເພິ່ງພາຂໍ້ເທັດຈິງທີ່ວ່າ ຂໍ້ມູນທີ່ໄດ້ມາຈາກຄົນເຈັບ ຫຼື ຕົວແທນຄອບຄົວນັ້ນແມ່ນສົມບູນ ແລະຖືກຕ້ອງ. ຂໍ້ກໍານົດຂອງການຊ່ວຍເຫຼືອທາງການເງິນບໍ່ກີດກັນສິດທີ່ຕໍ່ການເກັບຄ່າບໍລິການ, ບໍ່ວ່າຈະເປັນການເກັບຍ້ອນຫຼັງ ຫຼື ໃນເວລາໃຫ້ບໍລິການ, ສໍາລັບການບໍລິການທັງໝົດ ເມື່ອຖືກສໍ້ໂກງ, ຫຼື ຄົນເຈັບ ຫຼືຕົວແທນຄອບຄົວໃຫ້ຂໍ້ມູນບໍ່ຖືກຕ້ອງໂດຍເຈດຕະນາ. ນອກຈາກນີ້, LLUCH ສະຫງວນສິດໃນການຊອກຫາເອົາການບັນເທົາຢຸງອຍາ, ການດໍາເນີນຄະດີແພ່ງແລະອາຍາ, ຈາກເຫຼົ່າຄົນເຈັບ ຫຼື ຕົວແທນຄອບຄົວທີ່ສໍ້ໂກງ ຫຼື ໃຫ້ຂໍ້ມູນບໍ່ຖືກຕ້ອງໂດຍເຈດຕະນາ ເພື່ອໃຫ້ມີຄຸນສົມບັດໄດ້ຮັບ LLUCH FAP.

3. ນະໂຍບາຍດ້ານເຄຣດິດ ແລະການທວງໜີ້ - LLUCH ໄດ້ກໍານົດນະໂຍບາຍການຮຽກເກັບເງິນ ແລະການທວງໜີ້ໄວ້ຊຶ່ງມີໃຫ້ຢູ່ທາງອອນໄລນ໌ທີ່ [https://medical-center.lomalindahealth.org/financial-assistance#LLUCH](https://medical-center.lomalindahealth.org/financial-assistance#LLUCH). ການດໍາເນີນການທັງໝົດໂດຍ LLUCH ໃນການເອົາຂໍ້ມູນດ້ານເຄຣດິດ ກ່ຽວກັບຄົນເຈັບ/ບຸກຄົນທີ່ຮັບຜິດຊອບ ຫຼື ໃນສ່ວນທີ່ອ້າງອີງເຖິງ ຄົນເຈັບ/ຄົນທີ່ຮັບຜິດຊອບ ຕໍ່ກັບອົງການທວງໜີ້ຈາກພາຍນອກ ຈະສອດຄ່ອງເປັນໄປຕາມນະໂຍບາຍດ້ານເຄຣດິດ ແລະການທວງໜີ້.

ອະນຸມັດແລ້ວ: ຄະນະກໍາມະການບໍລິຫານ LLUCH, ຜູ້ບໍລິຫານສູງສຸດຂອງ LLUCH, ຄະນະຜູ້ນໍາບໍລິຫານຂອງໂຮງໝໍ LLUCH, ຮອງປະທານອາວຸໂສດ້ານການເງິນຂອງ LLUCH